ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

17-20 ຕຸລາ 2022
ປີທີ 11
ສະບັບທີ 884

## ປະທານ ກຜງສ ຕິດຕາມກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານ ຢູ່ແຂວງຫລວງນ້ຳທາ



(ສພຊ) ໃນຕົ້ນເດືອນຕຸລາ ຜ່ານມາ, ກຳມາທິການແຜນການ, ການເງິນ ແລະ ການກວດສອບ (ກຜງສ) ສະພາແຫ່ງຊາດ ໄດ້ເຄື່ອນໄຫວຕິດຕາມກວດກາ 6 ເດືອນທ້າຍ ປີ 2022 ຢູ່ແຂວງຫລວງນ້ຳທາ ນຳໂດຍທ່ານ ລີເບີ ລີບົວປາວ ກຳມາທິການແຜນການ, ການເງິນ ແລະ ການກວດສອບ ຂອງສະພາແຫ່ງຊາດ ພ້ອມດ້ວຍຄະນະ ເຊິ່ງໄດ້ເຂົ້າຢ້ຽມຢາມ

ອ່ານຕໍ່ໜ້າ 2

## ຮຽບຮຽງເນື້ອໃນປື້ມຄູ່ມືການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ



(ສພຊ) ໃນລະຫວ່າງວັນທີ 14-15 ຕຸລາ 2022 ທີ່ເມືອງວັງວຽງ ແຂວງວຽງຈັນ, ກຳມາທິການຍຸຕິທຳຂອງສະພາແຫ່ງຊາດ ໄດ້ສຳເລັດກອງປະຊຸມຮຽບຮຽງເນື້ອໃນປື້ມຄູ່ມືການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ຄະນະປະຈຳສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ຄຳແພງ ວິລະພັນ ປະທານກຳມາທິການຍຸຕິທຳ ສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານຮອງປະທານກຳມາທິການຕ່າງໆພາຍໃນສະພາແຫ່ງຊາດ, ຄະນະບໍດີຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ, ຮອງປະທານສານປະຊາຊົນສູງສຸດ, ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ທີ່ປຶກສາອາວຸໂສທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ ພ້ອມດ້ວຍຄະນະກົມ, ຄະນະພະແນກ ແລະ ວິຊາການທີ່ກ່ຽວຂ້ອງ.

ໃນກອງປະຊຸມ, ບັນດາທ່ານທີ່ເຂົ້າຮ່ວມໄດ້ປຶກສາຫາລື ແລະ ຄົ້ນຄວ້າປະກອບຄຳຄິດຄຳເຫັນໃສ່ຮ່າງປື້ມຄູ່ມືການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ຄະນະປະຈຳສະພາແຫ່ງຊາດ ເພື່ອເຮັດໃຫ້ເນື້ອໃນຂອງປື້ມຄູ່ມືດັ່ງກ່າວ ມີຄວາມຄົບຖ້ວນ, ກະທັດຮັດ ແລະ ສາມາດນຳໃຊ້ໄດ້ໃນວຽກງານຕົວຈິງໃຫ້ມີປະສິດທິຜົນສູງສຸດ.

ອ່ານຕໍ່ໜ້າ 2

## ຍົກສູງບົດບາດການເປັນເສນາທິການໃຫ້ແກ່ ກວສຊ ແລະ ຄະນະ ສສຊ ປະຈຳເຂດເລືອກຕັ້ງ



(ສພຊ) ໃນລະຫວ່າງວັນທີ 18-19 ຕຸລາ 2022 ທີ່ນະຄອນຫລວງພະບາງ, ແຂວງຫລວງພະບາງ ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ໄດ້ຈັດກອງປະຊຸມຝຶກອົບຮົມຍົກສູງບົດບາດການເປັນເສນາທິການໃຫ້ແກ່ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ແລະ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ໂດຍການເປັນປະທານຂອງທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ມີບັນດາທ່ານຮອງປະທານກຳທິການ, ຄະນະເລຂາທິການ-ຮອງເລຂາທິການສະພາປະຊາຊົນຂັ້ນແຂວງ ຈາກ 9 ແຂວງຄື: ຜົ້ງສາລີ, ຫລວງນ້ຳທາ, ບໍ່ແກ້ວ, ອຸດົມໄຊ, ຫລວງພະບາງ, ຫົວພັນ, ຊຽງຂວາງ, ໄຊຍະບູລີ ແລະ ວຽງຈັນ; ຄະນະກົມ, ຄະນະພະແນກ, ຫົວໜ້າ-ຮອງຫົວໜ້າຂະແໜງຊ່ວຍວຽກຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ບັນດາທ່ານວິທະຍາກອນຈາກສະພາແຫ່ງຊາດ ແລະ ກະຊວງພາຍໃນ ພ້ອມດ້ວຍພະນັກງານ-ລັດຖະກອນ ພາຍໃນສະພາແຫ່ງຊາດ ເຊິ່ງກອງປະຊຸມໄດ້ຮັບ

ອ່ານຕໍ່ໜ້າ 3

## ກະກຽມຄວາມພ້ອມການເປັນເຈົ້າພາບ ຈັດກອງປະຊຸມ CLV



(ສພຊ) ວັນທີ 6 ຕຸລາຜ່ານມານີ້, ທ່ານ ນາງ ວັນດີ ບຸດທະສະວົງ ຮອງປະທານກຳມາທິການການຕ່າງປະເທດ ສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງເຊກອງ ໃນໂອກາດດັ່ງກ່າວນີ້, ທີ່ຫ້ອງວ່າການແຂວງເຊກອງ ທ່ານ ນາງ ຈັນທອນ ມະຫາໄຊ ຮອງເຈົ້າແຂວງໆເຊກອງ ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ ພ້ອມທັງລາຍ

ອ່ານຕໍ່ໜ້າ 3

## ຮອງປະທານ ກຕທ ພົບປະ ແລະ ເຮັດວຽກ ກັບສະມາຊິກສະພາຕ່ຳ ສ.ອາເມລິກາ




(ສພຊ) ວັນທີ 13 ຕຸລາຜ່ານມາ, ທີ່ສະພາແຫ່ງຊາດ ທ່ານ ນາງ ວັນດີ ບຸດທະສະວົງ ຮອງປະທານກຳມາທິການການຕ່າງປະເທດ (ກຕທ) ສະພາແຫ່ງຊາດລາວ ພ້ອມດ້ວຍຄະນະ ໄດ້ພົບປະ ແລະ ເຮັດວຽກ ກັບທ່ານ ດຣ. Ami Bera ສະມາຊິກສະພາຕ່ຳ ແຫ່ງສະຫະລັດອາເມລິກາ, ປະທານອະນຸກຳມະການຮັບຜິດຊອບອາຊີ, ປາຊີຟິກ, ອາຊີກາງ ແລະ ບັນຫາການເກືອດຫ້າມຕ່າງໆ ພ້ອມດ້ວຍຄະນະ.

ໃນການພົບປະຄັ້ງນີ້, ສອງຝ່າຍໄດ້ແລກປ່ຽນຄຳຄິດຄຳເຫັນນຳ

ອ່ານຕໍ່ໜ້າ 2

## ສຳເລັດການເຂົ້າຮ່ວມກອງປະຊຸມປຶກສາຫາລື ຂອງສະມາຊິກລັດຖະສະພາໝູ່ມໄອປາ



(ສພຊ) ວັນທີ 17 ຕຸລາຜ່ານມາ, ທ່ານ ພອນສານ ວິໄລເມັ້ງ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ທັງເປັນຮອງປະທານຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມປຶກສາຫາລື ຂອງສະມາຊິກລັດຖະສະພາໝູ່ມສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA) ໃນຮູບແບບທາງໄກ. ກອງປະຊຸມດັ່ງກ່າວ, ຈັດຂຶ້ນພາຍໃຕ້ການເປັນເຈົ້າພາບຂອງສະພາແຫ່ງຊາດແຫ່ງຣາຊະອານາຈັກກຳປູເຈຍ ໂດຍມີຄະນະຜູ້ແທນຈາກສະພາແຫ່ງຊາດ ກຳປູເຈຍ, ອິນໂດເນເຊຍ, ລາວ, ໄທ, ຫວຽດນາມ, ບຣູໄນ, ຟີລິບປິນ ແລະ ເລຂາທິການໃຫຍ່ໄອປາ ເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້, ຄະນະຜູ້ແທນໄດ້ປຶກສາຫາລືຮ່ວມກັນກ່ຽວຄວາມເປັນໄປໄດ້ໃນການຍົກລະດັບ

ອ່ານຕໍ່ໜ້າ 3


ໜ້າ 4


ໜ້າ 4


ໜ້າ 4


ໜ້າ 5


ໜ້າ 5


ໜ້າ 5

## ປະທານ...

ແລະ ພົບປະ ກັບທ່ານ ຄຳໄຫລ ສີປະເສີດ ເຈົ້າແຂວງຫລວງນ້ຳທາ ແລະ ທ່ານ ຄຳຟອງ ອິນມານີ ປະທານສະພາປະຊາຊົນແຂວງຫລວງນ້ຳທາ ເພື່ອລາຍງານຈຸດປະສົງໃນການລົງເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກໃນຄັ້ງນີ້ ແລະ ໄດ້ຮັບຟັງການລາຍງານສະພາບການຈັດຕັ້ງປະຕິບັດວຽກງານທີ່ພົ້ນເດັ່ນໂດຍຫຍໍ້ຂອງແຂວງຫລວງນ້ຳທາ ແລະ ສະພາປະຊາຊົນແຂວງ.



ພ້ອມດຽວກັນນັ້ນ, ຄະນະໄດ້ປະຊຸມຮ່ວມກັບພະແນກການທີ່ກ່ຽວຂ້ອງຂອງແຂວງ ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ພາຍໃຕ້ການເປັນປະທານຂອງທ່ານ ລີເບີ ລີບົ່ວປາວ ເຂົ້າຮ່ວມມີທ່ານ ຄຳຟອງ ອິນມານີ, ມີບັນດາສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ, ຮອງຫົວໜ້າພະແນກການທີ່ກ່ຽວຂ້ອງ, ຫົວໜ້າ, ຮອງຫົວໜ້າຂະແໜງການ ພ້ອມດ້ວຍພະນັກງານວິຊາການທີ່ກ່ຽວຂ້ອງຈາກສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ເຂົ້າຮ່ວມ 30 ກວ່າຄົນ.

ໃນກອງປະຊຸມ ໄດ້ຮັບຟັງການລາຍງານຕາມຄຳຖາມເຈາະຈີ້ມຂອງກຳມາທິການແຜນການ, ການເງິນ ແລະ ການກວດສອບ ຂອງສະພາແຫ່ງຊາດ ເປັນຕົ້ນຮັບຟັງການລາຍງານຂອງບັນດາພະແນກການຂອງແຂວງທີ່ກ່ຽວຂ້ອງ ກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍ, ວຽກງານຈຸດສຸມ ແລະ ມາດຕະການຈັດຕັ້ງປະຕິບັດຂອງແຜນພັດທະນາເສດຖະກິດ-ສັງຄົມ ປີ 2022 ຂອງແຂວງ ໂດຍສະເພາະລົງເລິກກ່ຽວກັບໂຄງການລົງທຶນຂອງລັດ ແລະ ໜີ້ສິນໂຄງການລົງທຶນຂອງລັດ ແລະ ການສ້າງແຜນພັດທະນາເສດຖະກິດ-ສັງຄົມ ປີ 2023 ຂອງແຂວງ; ບົດລາຍງານການຈັດຕັ້ງປະຕິບັດຄາດໝາຍ, ວຽກຈຸດສຸມ ແລະ ມາດຕະການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ມະຕິແຜນງົບປະມານແຫ່ງລັດ ປີ 2022 ຂອງແຂວງ ແລະ ຮັບຟັງລາຍງານກ່ຽວກັບການຮັກສາສະຖຽນລະພາບທາງດ້ານເສດຖະກິດມະຫາພາກ ໂດຍສະເພາະສຸມໃສ່ການຕິດຕາມກວດກາສະພາບການເພີ່ມຂຶ້ນຂອງລາຄາສິນຄ້າ ແລະ ການເຄື່ອນເໜັງຂອງອັດຕາແລກປ່ຽນຂອງແຂວງ; ຈາກນັ້ນ, ຜູ້ແທນກອງປະຊຸມຍັງໄດ້ແລກປ່ຽນປະກອບຄຳຄິດເຫັນຕາມຄຳຖາມເຈາະຈີ້ມຂອງປະທານກອງປະຊຸມ ເປັນຕົ້ນແຜນການຈັດຕັ້ງປະຕິບັດວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍໃນຂົງເຂດແຜນການ-ການລົງທຶນພາຍໃນແຂວງ ຢ່າງກົງໄປກົງມາ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດດັ່ງກ່າວ ມີຄວາມຖືກຕ້ອງ, ສອດຄ່ອງຕາມຄວາມເປັນຈິງ ແລະ ເຮັດໃຫ້ການຕິດຕາມກວດກາ, ເກັບກຳຂໍ້ມູນ ຂອງກຳມາທິການທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ ໄດ້ຂໍ້ມູນຈະແຈ້ງ ແລະ ຊັດເຈນ ກວ່າເກົ່າ ເພື່ອກະກຽມເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະໄຂຂຶ້ນໃນຕໍ່ໜ້າ.

ໂອກາດນີ້, ທ່ານ ລີເບີ ລີບົ່ວປາວ ໄດ້ມີຄຳເຫັນໂອ້ລົມ ແລະ ໃຫ້ທິດຊີ້ນຳ ເຊິ່ງທ່ານໄດ້ສະແດງຄວາມຊົມເຊີຍໃນການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານ ເປັນຕົ້ນແຜນການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ເຫັນວ່າມີຜົນສຳເລັດຫລາຍດ້ານພໍສົມຄວນ ແລະ ຮຽກຮ້ອງໃຫ້ເອົາໃຈໃສ່ສືບຕໍ່ແຜນວຽກທີ່ຍັງຄົງຄ້າງໃຫ້ສຳເລັດຕາມຄາດໝາຍທີ່ວາງໄວ້.

ພ້ອມດຽວກັນນັ້ນ, ຄະນະໄດ້ເຄື່ອນໄຫວຕິດຕາມກວດກາ, ເກັບກຳຂໍ້ມູນຕົວຈິງ ຢູ່ເຂດເສດຖະກິດພິເສດບໍ່ເຕ່ນ ແຂວງຫລວງນ້ຳທາ ເຊິ່ງໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດພິເສດ ໂດຍສະເພາະແມ່ນການລົງທຶນ, ການສ້າງຖານລາຍຮັບ, ການສຳລະສະສາງເປັນເງິນຕາຕ່າງປະເທດ ແລະ ບັນຫາອື່ນໆທີ່ກ່ຽວຂ້ອງ ແລະ ການຈັດຕັ້ງປະຕິບັດວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກຂອງເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາສິ່ງເສບຕິດ ຢູ່ພາຍໃນເຂດເສດຖະກິດພິເສດ ບໍ່ເຕ່ນແດນງາມ.



## ຮຽບຮຽງ...

ຕອນທ້າຍກອງປະຊຸມ, ທ່ານ ຄຳແພງ ວິລະພັນ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້ ທີ່ໄດ້ພ້ອມກັນສຸມໃສ່ຄົ້ນຄວ້າ ແລະ ແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ ດ້ວຍຄວາມຮັບຜິດຊອບ, ແນໃສ່ເຮັດໃຫ້ການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ຂອງສະພາປະຊາຊົນຂັ້ນແຂວງ, ສະພາແຫ່ງຊາດ ແລະ ພາກສ່ວນກ່ຽວຂ້ອງ ມີຄວາມຖືກຕ້ອງ ແລະ ສອດຄ່ອງ ຕາມມະຕິຂອງກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ສະບັບເລກທີ 037/ຄບສພ, ລົງວັນທີ 18 ມິຖຸນາ 2018 ແລະ ມະຕິ ສະບັບເລກທີ 112/ກມສພ, ລົງວັນທີ 2 ມິຖຸນາ 2020 ທັງເປັນການຫັນເອົາການຄຸ້ມຄອງລັດ, ການຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍ ໃຫ້ເຂົ້າສູ່ລວງເລິກ ແລະ ຊີວິດຕົວຈິງເທື່ອລະກ້າວ ແລະ ເພື່ອເພີ່ມທະວີການຕິດຕາມກວດກາຂອງສະພາແຫ່ງຊາດ ຕໍ່ກັບຄວາມຮັບຜິດຊອບການເມືອງຂອງອົງການທີ່ມີສິດ ແລະ ໜ້າທີ່ ໃນການແກ້ໄຂຄຳຮ້ອງທຸກ ເພື່ອຮັບປະກັນໃຫ້ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ປະຊາຊົນສາມາດເຂົ້າເຖິງຂະບວນການຍຸຕິທຳຫລາຍຂຶ້ນ ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ມີຄວາມຍຸຕິທຳ ແລະ ໂປ່ງໃສ.

ກອງປະຊຸມຄັ້ງນີ້, ໄດ້ຮັບການສະໜັບສະໜູນທາງດ້ານງົບປະມານ ໂດຍອົງການເຮວວີຕັດ (HELVETAS) ແລະ ງົບປະມານສົມທົບຈາກຄະນະເລຂາທິການສະພາແຫ່ງຊາດ.

(ນາງ ປາກາລັກ ພົມມີໄຊ)

## ຮອງປະທານ...

ກັນ ຢ່າງກົງໄປກົງມາ ແລະ ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນຍາວນານ ແລະ ບໍ່ຂາດໄລຍະ ບົນພື້ນຖານການເປັນຄູ່ຮ່ວມມືແບບກວມລວມ ລະຫວ່າງ ສປປ ລາວ ແລະ ສ.ອາເມລິກາ; ເວົ້າລວມ, ເວົ້າສະເພາະ ລະຫວ່າງສອງອົງການນິຕິບັນຍັດ ຂອງສອງປະເທດ ລາວ-ອາເມລິກາ ທີ່ໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ ພ້ອມທັງໄດ້ປຶກສາຫາລືທິດທາງແຜນການພົວພັນຮ່ວມມື ລະຫວ່າງ ສອງອົງການນິຕິບັນຍັດຂອງສອງປະເທດໃນຕໍ່ໜ້າ.




ໃນຕອນທ້າຍ, ທ່ານ ດຣ. Ami Bera ໄດ້ກ່າວສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນຂອງຝ່າຍລາວ ພ້ອມທັງຢືນຢັນວ່າຈະສືບຕໍ່ໃຫ້ການສະໜັບສະໜູນແກ່ຝ່າຍລາວໃນຕໍ່ໜ້າ ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບອັນດີງາມລະຫວ່າງສອງປະເທດ ກໍຄື ສອງອົງການນິຕິບັນຍັດ ສ.ອາເມລິກາ ແລະ ສປປລາວ ໃຫ້ໄດ້ຮັບໝາກຜົນຂຶ້ນເລື້ອຍໆ.

## ເລື່ອງເດັ່ນ ຂ່າວເດັ່ນ

**# ຄັດໂດຍ: ທອມສະນິດ**

❑ ໃນເດືອນຕຸລາ 2022 ທະນາຄານແຫ່ງ ສປປລາວ ໄດ້ນຳເອົາທະນະບັດ ປະເພດໃບ 10.000 ກີບ ແລະ 20.000 ກີບ ຮຸ່ນປີ 2020 (ຮູບແບບປັບປຸງໃໝ່) ອອກສູ່ຂອດຈໍລະຈອນໃຫ້ສັງຄົມໄດ້ນຳໃຊ້ຄວບຄູ່ກັບທະນະບັດທັງສອງປະເພດຮຸ່ນປີ 2003 ທີ່ນຳໃຊ້ໃນຂອດຈໍລະຈອນ ປັດຈຸບັນຍັງສາມາດນຳໃຊ້ໝູນວຽນເຂົ້າໃນການຊຳລະສະສາງຊື້ສິນຄ້າ ແລະ ບໍລິການ ໄດ້ຕາມປົກກະຕິ ຈະບໍ່ມີການຍົກເລີກການນຳໃຊ້ແຕ່ຢ່າງໃດ ເຊິ່ງທະນະບັດທັງ 2 ປະເພດດັ່ງກ່າວມີລັກສະນະໂດຍລວມດັ່ງນີ້: ເປັນທະນະບັດບໍ່ມີຂອບມີຂະໜາດລວງຍາວຫລຸດລົ່ນກັນ 3 ມມ ຄື: ປະເພດໃບ 10.000 ກີບ ມີລວງຍາວ 153ມມ ແລະ ລວງກວ້າງ 72ມມ; ປະເພດໃບ 20.000 ກີບ ມີລວງຍາວ 156ມມ ແລະ ລວງກວ້າງ 72ມມ ແລະ ໂທນສີຂອງໃບທະນະບັດທັງສອງປະເພດຍັງຄ້າຍຄືກັບໂທນສີທະນະບັດປະເພດໃບ 10.000 ກີບ ແລະ 20.000 ກີບ ຮຸ່ນປີ 2003 ທີ່ນຳໃຊ້ປັດຈຸບັນ.

**ນສພ. ປະເທດລາວ 17/10/2022**

❑ ປັດຈຸບັນ, ວິສາຫະກິດຫວຽດນາມ ທີ່ມາລົງທຶນຢູ່ ສປປລາວ ມີທັງໝົດ 417 ໂຄງການ, ມູນຄ່າການລົງທຶນທັງໝົດ 4,3 ຕື້ໂດລາ ແລະ ຖືກຈັດຢູ່ໃນອັນດັບ 3 ໃນຈຳນວນ 54 ປະເທດ ແລະ ເຂດແຄ້ວນທີ່ມີການລົງທຶນຢູ່ ສປປລາວ

**ນສພ. ປະເທດລາວ 17/10/2022**

❑ ໂຄງການຕິດຕັ້ງ ແລະ ບໍລິການລະບົບຊີງຊັ່ງທັນສະໄໝ ເຊິ່ງຕິດຕັ້ງຢູ່ 4 ດ່ານພາສີສາກົນ ຄື: ດ່ານພາສີສາກົນບໍ່ເຕ່ນ, ດ່ານພາສີສາກົນນ້ຳກັ່ນ, ດ່ານພາສີສາກົນນ້ຳພາວ ແລະ ດ່ານພາສີສາກົນນາເພົ້າ ໂຄງການດັ່ງກ່າວແມ່ນໂຄງການໜຶ່ງໃນການຫັນເປັນທັນສະໄໝຂອງຂະແໜງພາສີ ເຊິ່ງແນໃສ່ການຈັດເກັບຄ່າບໍລິການຂອງພາຫະນະຂົນສົ່ງສິນຄ້ານຳເຂົ້າ-ສົ່ງອອກບາງປະເພດ ເປັນຕົ້ນ: ປະເພດແຮ່ທາດຕ່າງໆ, ໄມ້ທ່ອນ (ໄມ້ປູກ), ໄມ້ແປຮູບ ແລະ ນ້ຳມັນເຊື້ອໄຟ ເຮັດໃຫ້ຂະແໜງການລັດສາມາດຄຸ້ມຄອງຕິດຕາມການນຳເຂົ້າ-ສົ່ງອອກສິນຄ້າປະເພດດັ່ງກ່າວ ໃຫ້ມີຄວາມຖືກຕ້ອງ, ຊັດເຈນ, ໂປ່ງໃສ ແລະ ອັດຊ່ອງວ່າງການຮົ່ວໄຫລຂອງລາຍຮັບ ແລະ ສາມາດກວດສອບໄດ້. ສຳລັບໂຄງການລະບົບຊີງຊັ່ງທັນສະໄໝ ການຕິດຕັ້ງພັດທະນາລະບົບໂປແກຣມການເຊື່ອມຕໍ່ກັບລະບົບໄດ້ສຳເລັດການແຈ້ງພາສີ ASYCUDA ມາຮອດປັດຈຸບັນ 100% ແລະ ໄດ້ເປີດທົດລອງນຳໃຊ້ເຂົ້າໃນການກວດກາສິນຄ້າເປົ້າໝາຍຂອງລັດຖະບານກຳນົດໄວ້ເປັນທີ່ຮຽບຮ້ອຍ ຕາມຄຳແນະນຳສະບັບເລກທີ 2600/ກງ, ຂໍ້ຕົກລົງ 2601/ກງ ແຈ້ງການກົມພາສີສະບັບເລກທີ 06383/ກພສ ນັບແຕ່ວັນທີ 28 ກັນຍາ 2022 ເປັນຕົ້ນມາ.

**ນສພ. ວຽງຈັນໃໝ່ 19/10/2022**

❑ ພາຍຫລັງໄດ້ເປີດນຳໃຊ້ເສັ້ນທາງລົດໄຟ ລາວ-ຈີນ ມາຮອດວັນທີ 3 ຕຸລາ 2022 ນີ້, ລົດໄຟ ລາວ-ຈີນ ໄດ້ສະສົມໂຕເລກຜູ້ໂດຍສານທັງໝົດ 739 ລ້ານເທື່ອຄົນ ແລະ ການຂົນສົ່ງສິນຄ້າສະສົມໄດ້ 851 ລ້ານໂຕນ, ໃນນັ້ນ ມີສິນຄ້າຂ້າມແດນ 154 ລ້ານໂຕນ. ສະເພາະເດືອນກັນຍາຜ່ານມາ, ໄດ້ຂົນສົ່ງສິນຄ້າເຖິງ 125 ລ້ານໂຕນ, ໄດ້ສ້າງສະຖິຕິການຂົນສົ່ງສິນຄ້າຫລາຍທີ່ສຸດໃນເດືອນດຽວຕັ້ງແຕ່ເລີ່ມເປີດການຂົນສົ່ງສິນຄ້າ 100 ກວ່າປະເພດໃນຕົ້ນປີ ແລະ ເພີ່ມຂຶ້ນມາເປັນ 1.200 ປະເພດ ແລະ ມີມູນຄ່າຂອງສິນຄ້າທັງໝົດແມ່ນຫລາຍກວ່າ 100 ຕື້ຢວນ.

**ນສພ. ປະເທດລາວ 19/10/2022**



## ຍົກສູງ...

ການສະໜັບສະໜູນຈາກອົງການເຮວວີຕັດ (HELVETAS).

ຈຸດປະສົງ ເພື່ອເປັນການຍົກລະດັບຂີດຄວາມສາມາດການເປັນເສນາທິການທາງດ້ານເນື້ອໃນໃຫ້ແກ່ພະນັກງານ-ລັດຖະກອນ ພາຍໃນກົມທີ່ເປັນເສນາທິການຂອງກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ແລະ ພະນັກ ງານຊ່ວຍວຽກຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ; ເພື່ອເພີ່ມທະວີຄວາມຮັບຮູ້, ເຂົ້າໃຈເລິກເຊິ່ງ ແລະ ຖືກຕ້ອງຕໍ່ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງກວສຊ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ການພົວພັນປະສານງານກັບສະພາປະຊາຊົນຂັ້ນແຂວງ ລວມທັງການພົບປະກັບປະຊາຊົນ ຂອງສະມາຊິກສະພາ. ເຜີຍແຜ່ເຊື່ອມຊຶມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງກົມຄຸ້ມຄອງສະມາຊິກສະພາແຫ່ງຊາດ ແລະ ກົມພັດທະນາວຽກງານສະພາ; ເພີ່ມທະວີຄວາມຮັບຮູ້, ເຂົ້າໃຈເລິກເຊິ່ງ ແລະ ຖືກຕ້ອງຕໍ່ພາລະບົດບາດ, ສິດ ແລະ ໜ້າທີ່ຂອງກວສຊ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ການພົວພັນປະສານງານກັບສະພາປະຊາຊົນຂັ້ນແຂວງ ລວມທັງການພົບປະກັບປະຊາຊົນ ຂອງສະມາຊິກສະພາ; ເຜີຍແຜ່ເຊື່ອມຊຶມພາລະບົດບາດ, ສິດແລະໜ້າທີ່ຂອງກົມຄຸ້ມຄອງສະມາຊິກສະພາແຫ່ງຊາດ ແລະ ກົມພັດທະນາວຽກງານສະພາ ແລະ ເພື່ອສ້າງຄວາມຮັບຮູ້ຢ່າງກວ້າງຂວາງ ຕໍ່ວຽກງານຄຸ້ມຄອງພະນັກງານ-ລັດຖະກອນ ແລະ ການສ້າງຕັ້ງກົງຈັກການຈັດຕັ້ງການຄຸ້ມຄອງບໍລິຫານລັດຂັ້ນສູນກາງ ແລະ ທ້ອງຖິ່ນ ລວມທັງການພົວພັນປະສານງານ ລະຫວ່າງ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ອົງການປົກຄອງຂັ້ນແຂວງ ໃຫ້ມີຄວາມສະດວກຕໍ່ການປະຕິບັດໜ້າທີ່ວຽກງານມີຄວາມເປັນເອກະພາບ ແລະ ຍົກລະດັບວຽກໃຫ້ມີປະສິດທິຜົນສູງຂຶ້ນກວ່າເກົ່າ.

ກອງປະຊຸມ ໄດ້ຮັບຟັງການສະເໜີກ່ຽວກັບການເພີ່ມທະວີປະສານງານລະຫວ່າງກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ຄະນະເລຂາທິການສະພາແຫ່ງຊາດ ແລະ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ເພື່ອຍົກສູງຄຸນນະພາບໃນການປະຕິບັດວຽກງານ; ພາລະບົດບາດຂອງກົມຄຸ້ມຄອງສະມາຊິກສະພາແຫ່ງຊາດ ໂດຍຕິດພັນການຮ່າງບົດສະຫລຸບ ແລະ ແຜນການເຄື່ອນໄຫວຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ການສະຫລຸບ-ລາຍງານ ການລົງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ; ພາລະບົດບາດຂອງກົມພັດທະນາວຽກງານສະພາ ໂດຍສະເພາະວຽກງານການພົວພັນປະສານສົມທົບກັບສະພາປະຊາຊົນຂັ້ນແຂວງ ແລະ ການສ້າງຄວາມເຂົ້າໃຈເລິກເຊິ່ງຕໍ່ລະບົບການປົກຄອງຂອງ ສປປລາວ ໂດຍລົງເລິກໂຄງປະກອບກົງຈັກການຈັດຕັ້ງຢູ່ຂັ້ນທ້ອງຖິ່ນ ແລະ ການຄຸ້ມຄອງພະນັກງານ-ລັດຖະກອນ ຕາມພາລະບົດບາດຂອງກະຊວງພາຍໃນ; ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນໃສ່ບັນດາຫົວຂໍ້ທີ່ນຳມາສະເໜີຕາມຄຳເຫັນເຈາະຈີ້ມຂອງທ່ານປະທານກອງປະຊຸມ ເພື່ອແລກ ປ່ຽນຄຳຄິດເຫັນເຊິ່ງກັນ ແລະກັນ.

ໃນໂອກາດນີ້, ທ່ານ ສຸບັນ ສະວະບຸດ ໄດ້ກ່າວວ່າ: ເພື່ອເປັນການຍົກສູງບົດບາດການເປັນເສນາທິການຂອງພະນັກງານ-ລັດຖະກອນ ທັງຢູ່ສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງ ແລະ ທັງເປັນການເພີ່ມທະວີການພົວພັນປະສານງານກັນລະຫວ່າງກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ຄະນະເລຂາທິການສະພາແຫ່ງຊາດ ແລະ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ໃຫ້ມີຄວາມໂລ່ງລ່ຽນຂຶ້ນຕື່ມ; ສະນັ້ນ, ຈະໄດ້ສຸມໃສ່ຄົ້ນຄວ້າ, ປຶກສາຫາລື, ສົນທະນາແລກແລກປ່ຽນຄຳຄິດຄຳເຫັນຮ່ວມກັນ ຕໍ່ເນື້ອໃນຕ່າງໆທີ່ທາງກອງປະຊຸມໄດ້ຍົກຂຶ້ນມານຳສະເໜີ; ພ້ອມນັ້ນ, ທ່ານຍັງຮຽກຮ້ອງມາຍັງບັນດາທ່ານຜູ້ແທນກອງປະຊຸມ ຈົ່ງຍົກສູງຄວາມຮັບຜິດຊອບ ເປັນເຈົ້າການໃນການຄົ້ນຄວ້າ, ສົນທະນາແລກປ່ຽນຄຳຄິດເຫັນຢ່າງສ້າງສັນມີຈຸດສຸມ, ຮັກສາເວລາ ແລະ ຖືກປະເດັນ.

(ສອນສັກ ວັນວິໄຊ)




## ສຳເລັດ...

ກອງປະຊຸມສະມາຊິກລັດຖະສະພາໜຸ່ມໄອປາ ໃຫ້ກາຍເປັນກຳມາທິການວຽກງານສະມາຊິກລັດຖະສະພາໜຸ່ມຂອງສະມັດຊາໃຫຍ່ໄອປາ ເຊິ່ງກອງປະຊຸມບໍ່ເປັນທາງການຂອງສະມາຊິກລັດຖະສະພາໜຸ່ມໄອປາ ໄດ້ຈັດຂຶ້ນຄັ້ງທຳອິດ ໃນໂອກາດຈັດກອງປະຊຸມສະມັດຊາລັດຖະສະພາອາຊຽນ (AIPA) ຄັ້ງທີ 41 ໃນປີ 2020.

ໃນການເຂົ້າຮ່ວມກອງປະຊຸມ, ທ່ານ ພອນສານ ວິໄລເມັ້ງ ຜູ້ແທນສະພາແຫ່ງຊາດລາວ ໄດ້ມີຄຳເຫັນຕໍ່ກອງປະຊຸມ ໂດຍໄດ້ຕີລາຄາສູງຕໍ່ກອງປະຊຸມສະມາຊິກລັດຖະສະພາໜຸ່ມໄອປາ ເປັນເວທີສຳຄັນສຳລັບສະມາຊິກລັດຖະສະພາໜຸ່ມຂອງໄອປາ ໃນການພົບປະ, ແລກປ່ຽນ ແລະ ປຶກສາຫາລືກັນ ກ່ຽວກັບການແກ້ໄຂບັນຫາຕ່າງໆໃນບັນດາປະເທດອາຊຽນ; ພ້ອມນີ້, ທ່ານຍັງເຊື່ອວ່າ: ກອງປະຊຸມສະມາຊິກລັດຖະສະພາໜຸ່ມຂອງໄອປາ ຈະເປັນການສະໜັບສະໜູນ ແລະ ເສີມສ້າງນະໂຍບາຍ ໃນການສົ່ງເສີມການມີສ່ວນຮ່ວມຂອງຊາວໜຸ່ມ ໃນການຈັດຕັ້ງປະຕິບັດວຽກງານຕ່າງໆ ເພື່ອປະກອບສ່ວນເຂົ້າໃນການສ້າງປະຊາຄົມອາຊຽນ.

ກອງປະຊຸມຄັ້ງນີ້, ໄດ້ດຳເນີນໄປດ້ວຍບັນຍາກາດອັນດີ, ສະມາຊິກລັດຖະສະພາໜຸ່ມ ຈາກບັນດາປະເທດຕ່າງໆທີ່ເຂົ້າຮ່ວມກອງປະຊຸມໄດ້ມີການປະກອບຄຳຄິດຄຳເຫັນຢ່າງຟົດຟື້ນ ແລະ ໃຫ້ການສະໜັບສະໜູນການຈັດກອງປະຊຸມກຳມາທິການສະມາຊິກລັດຖະສະພາໜຸ່ມຂອງໄອປາ ເຊິ່ງຈະຂຶ້ນເປັນຄັ້ງທຳອິດໃນລະຫວ່າງກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 43 ທີ່ຣາຊະອານາຈັກກຳປູເຈຍ ຈະເປັນເຈົ້າພາບໃນເດືອນພະຈິກ 2022 ນີ້.



## ກະກຽມ...

ງານໂດຍຫຍໍ້ກ່ຽວກັບສະພາບລວມ ແລະ ຈຸດພິເສດຂອງແຂວງເຊກອງ ໂດຍສະເພາະດ້ານພື້ນຖານໂຄງລ່າງ ແລະ ທ່າແຮງດ້ານຕ່າງໆໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງ.

ໃນໂອກາດນີ້, ທ່ານ ນາງ ວັນດີ ບຸດທະສະວົງ ໄດ້ໃຫ້ຮູ້ເຖິງຈຸດປະສົງໃນການມາເຮັດວຽກຢູ່ແຂວງເຊກອງໃນຄັ້ງນີ້ ກໍເພື່ອເປັນການຕິດຕາມສະຖານທີ່ໃນການກະກຽມຄວາມພ້ອມໃນການເປັນເຈົ້າພາບຈັດກອງປະຊຸມຮ່ວມລະຫວ່າງສະພາແຫ່ງຊາດ 3 ປະເທດ ກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ I ທີ່ຈະຈັດຂຶ້ນຢູ່ 3 ແຂວງພາກໃຕ້ຂອງລາວ ຄື: ແຂວງຈຳປາສັກ, ເຊກອງ ແລະ ອັດຕະປື.

ຈາກນັ້ນ, ທ່ານຮອງປະທານກຳມາທິການການຕ່າງປະເທດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວເຮັດວຽກຢູ່ສະພາປະຊາຊົນແຂວງ ເພື່ອພົບປະ ແລະ ປຶກສາຫາລື ກັບຄະນະນຳສະພາປະຊາຊົນແຂວງ ແລະ ພະແນກການທີ່ກ່ຽວຂ້ອງຂອງແຂວງ ໂດຍໄດ້ຮັບຟັງການລາຍງານກ່ຽວກັບຄວາມພ້ອມທາງດ້ານສະຖານທີ່ຈັດກອງປະຊຸມ, ດ້ານບໍລິຫານ-ພິທີການ, ການຮັກສາຄວາມປອດໄພ, ພ້ອມທັງຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ສະພາບຄວາມພ້ອມດ້ານຕ່າງໆ ໃນການຈັດກອງປະຊຸມ ເຊິ່ງພາຍຫລັງໄດ້ຮັບຟັງການລາຍງານ ຄະນະໄດ້ກວດກາສະຖານທີ່ຕົວຈິງ ເປັນຕົ້ນ: ຫ້ອງປະຊຸມ, ໂຮງແຮມ, ຮ້ານອາຫານ ແລະ ສະຖານທີ່ທ່ອງທ່ຽວທີ່ຈະເປັນບ່ອນຮອງຮັບການເປັນເຈົ້າພາບຈັດກອງປະຊຸມຕື່ມອີກ.

(ນາງ ນາລີວັນ)






# ທຳລາຍຢາເສບຕິດ ໃນວັນຕ້ານຢາເສບຕິດ ຄົບຮອບ 21 ປີ



(ສພຊ) ຕອນເຊົ້າຂອງວັນທີ 14 ຕຸລາ 2022 ຢູ່ທີ່ສະໜາມກິລາຂອງແຂວງຫລວງນໍ້າທາ ໄດ້ຈັດພິທີຈູດທຳລາຍຢາເສບຕິດ ເນື່ອງໃນໂອກາດວັນຕ້ານຢາເສບຕິດຄົບຮອບ 21 ປີ (12 ຕຸລາ 2001-12 ຕຸລາ 2022) ໂດຍການເປັນປະທານຂອງທ່ານ ຄຳຟອງ ອິນມານີ ປະທານສະພາປະຊາຊົນແຂວງ, ປະທານຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດຂັ້ນແຂວງ; ມີການນຳພັກ-ລັດ, ຄະນະພັກ, ຄະນະບັນຊາການບັນຊາການ ປກຊ-ປກສ, ບັນດາພະແນກການອ້ອມຂ້າງແຂວງ, ນັກຮຽນ ແລະ ປະຊາຊົນເຂົ້າຮ່ວມ.

ໃນພິທີ, ທ່ານ ຄຳຟອງ ອິນມານີ ໄດ້ຂຶ້ນຜ່ານບົດລາຍງານຫຍໍ້ກ່ຽວກັບການເຄື່ອນໄຫວວຽກງານສະກັດກັ້ນ ແລະ ຕ້ານຢາເສບຕິດໃນໄລຍະ 1 ປີຜ່ານມາ ເຊິ່ງໄດ້ໂຄສະນາເຜີຍແຜ່ຜົນຮ້າຍຂອງຢາເສບຕິດ ດ້ວຍຫຼາຍຮູບການ ເຊັ່ນ ລົງໂຄສະນາຢູ່ບັນດາບ້ານເປົ້າໝາຍ ແລະ ບໍລິສັດທີ່ມາລົງທຶນປູກພືດທົດແທນການປູກຝິ່ນ 4 ຄັ້ງ, ມີຜູ້ເຂົ້າຮ່ວມຮັບຟັງທັງໝົດ 295 ຄົນ ຍິງ 99 ຄົນ; ລົງສ້າງບົດບັນທຶກສັນຍາຢຸດຕິການລັກລອບປູກຝິ່ນຢູ່ 5 ເມືອງ, ມີ 8 ກຸ່ມບ້ານ, ມີ 20 ບ້ານ ແລະ ມີຈຳນວນ 181 ຄອບຄົວ; ລົງສະກັດກັ້ນ, ທຳລາຍສວນຝິ່ນ ທີ່ປະຊາຊົນລັກລອບປູກໄດ້ທັງໝົດ 90,15 ເຮັກຕາ; ທົ່ວແຂວງມີຜູ້ຕິດຢາເສບຕິດ ທັງໝົດ 5.885 ຄົນ ຍິງ 721 ຄົນ, ປະເພດຢາບ້າ ຈຳນວນ 3.236 ຄົນ ຍິງ 253 ຄົນ ແລະ ຢາເສບຕິດປະເພດຢາຝິ່ນ ຈຳນວນ 2.649 ຄົນ ຍິງ 568 ຄົນ, ໄດ້ຮັບການບຳບັດຂັ້ນຊຸມຊົນໃຫ້ຜູ້ຕິດຢາເສບຕິດ ຈຳນວນ 3 ຊຸດ, ມີ 8 ບ້ານ, ມີຜູ້ເຂົ້າບຳບັດ 195 ຄົນ, ຍິງ 43 ຄົນ; ກວດນໍ້າປັດສະວະໃຫ້ນັກຮຽນ-ນັກສຶກສາ ແລະ ພະນັກງານທົ່ວແຂວງໄດ້ທັງໝົດ 1.734 ຄົນ ຍິງ 370 ຄົນ, ປະເມີນໂຮງຮຽນປອດຢາເສບຕິດທົ່ວແຂວງໄດ້ຈຳນວນ 5 ແຫ່ງ, ຜ່ານ 5 ແຫ່ງ. ເຈົ້າໜ້າທີ່ພະແນກສະກັດກັ້ນ ແລະ ຕ້ານຢາເສບຕິດ ປກສ ແຂວງ ກໍໄດ້ເຄື່ອນໄຫວເຮັດໜ້າທີ່ຂອງຕົນຢ່າງຕັ້ງໜ້າ ໃນປີ 2021 ຜ່ານມາ ມີຄະດີຄ້າງ 104 ເລື່ອງ, ຜູ້ຖືກຫາ 147 ຄົນ ຍິງ 17 ຄົນ, ຕ່າງປະເທດ 2 ຄົນ (ສັນຊາດຈີນ). ມາຮອດປີ 2022 ໄດ້ມ້າງຄະດີກ່ຽວກັບຢາເສບຕິດໄດ້ທັງໝົດ 138 ເລື່ອງ, ຜູ້ຖືກຫາ 187 ຄົນ ຍິງ 16 ຄົນ, ຕ່າງປະເທດ 3 ຄົນ, (ສັນຊາດຫວຽດນາມ 2 ຄົນ) ແລະ (ສັນຊາດຈີນ 1 ຄົນ) ມີຄື: ຢຶດຂອງກາງຢາເສບຕິດປະເພດ ຢາບ້າ ຈຳນວນ 21,240 ເມັດ, ມີນໍ້າໜັກ 2.124 ກຣາມ; ຢາເສບຕິດປະເພດຢາໄອສ໌ ມີນໍ້າໜັກ 1,38 ກຣາມ; ຢາເສບຕິດປະເພດຝິ່ນ ມີນໍ້າໜັກ 42.302 ກຣາມ; ນໍ້າກົດ ຈຳນວນ 376 ຕຸກ ເທົ່າກັບ 9.400 ລິດ.

ພິທີທຳລາຍຢາເສບຕິດໃນຄັ້ງນີ້, ຄະນະຮັບຜິດຊອບໄດ້ນຳເອົາຂອງກາງປະເພດຢາເສບຕິດ ເຊິ່ງສານໄດ້ຕັດສິນ ແລະ ນຳໃຊ້ໄດ້ຢ່າງເດັດຂາດແລ້ວ ມາຈູດທຳລາຍ ເຊິ່ງມີຢາເສບຕິດປະເພດຢາບ້າ ຈຳນວນ: 106.783 ເມັດ, ມີນໍ້າໜັກ ເທົ່າກັບ 10 ກິໂລກຣາມ 678,3 ກຣາມ; ຢາເສບຕິດປະເພດເຮໂຣອີນ ຈຳນວນ: 10 ແທ່ງ, ມີນໍ້າໜັກ ເທົ່າກັບ 3,5 ກິໂລກຣາມ; ຢາເສບຕິດປະເພດຢາຝິ່ນ ມີນໍ້າໜັກ 5 ກິໂລກຣາມ 228,7 ກຣາມ; ໂດຍອີງຕາມແຈ້ງການຂອງກົມໃຫຍ່ກະຊວງປ້ອງກັນຄວາມສະຫງົບ ຈະບໍ່ທຳລາຍຖິ້ມ.

ໂອກາດດັ່ງກ່າວ, ໄດ້ມີການມອບອຸປະກອນກິລາຄື ບານເຕະ, ບານສົ່ງ, ກະຕໍ້ຫວາຍ ໃຫ້ກັບໂຮງຮຽນມັດທະຍົມຕອນຕົ້ນບ້ານທົ່ງອຶ່ມ, ນໍ້າແງ້ນ, ທົ່ງໄຈ້ເໜືອ ລວມມູນຄ່າທັງໝົດ 2,5 ລ້ານກວ່າກີບ ໂດຍການມອບຂອງທ່ານ ຄຳຟອງ ອິນມານີ ແລະ ຮັບໂດຍຕາງໜ້າທັງ 3 ໂຮງຮຽນດັ່ງກ່າວ ທັງນີ້, ກໍເພື່ອໃຫ້ນັກຮຽນໄດ້ນຳໃຊ້ເຂົ້າໃນການຫຼິ້ນກິລາ ເພື່ອຫ່າງໄກຈາກຢາເສບຕິດ.

(ນາງ ອຳພອນ ສີປະເສີດ)

# ເຊັນບົດບັນທຶກ ລະຫວ່າງ ຄວສຜ ກັບ 4 ພະແນກການ



(ສພຊ) ເມື່ອທ້າຍເດືອນກັນຍາ 2022, ຢູ່ທີ່ຫ້ອງປະຊຸມພະແນກສຶກສາທິການ ແລະ ກິລາແຂວງ ໄດ້ຈັດພິທີເຊັນບົດບັນທຶກຮ່ວມລະຫວ່າງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ (ຄວສຜ) ສະພາປະຊາຊົນແຂວງ ກັບ 4 ພະແນກການຄື: ພະແນກສຶກສາທິການ ແລະ ກິລາ, ພະແນກສາທາລະນະສຸກ, ພະແນກແຮງງານ ແລະ ສະຫວັດດີການສັງຄົມ, ພະແນກຖະແຫລງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ໂດຍການເປັນປະທານຂອງທ່ານ ຄຳມະນີ ໄຊດວງຕາ ປະທານ ຄວສຜ ແລະ ທ່ານ ນາງ ຄຳພອນ ພົມມະຈັນ ຮອງປະທານສະພາປະຊາຊົນແຂວງ, ຜູ້ຊີ້ນຳວຽກງານ ຄວສຜ ສພຂ, ມີຮອງຫົວໜ້າພະແນກ, ຫົວໜ້າຂະແໜງ-ຮອງຫົວໜ້າຂະແໜງການກ່ຽວຂ້ອງຂອງ 4 ພະແນກການ ແລະ ຄະນະຮັບຊອບຈາກ ສພຂ ເຂົ້າຮ່ວມ.

ໃນພິທີ, ທ່ານ ນາງ ສິດທິວອນ ທົ່ງສາຄອນ ຮອງປະທານ ຄວສຜ ສພຂ ໄດ້ຕາງໜ້າຄະນະຮັບຜິດຊອບຜ່ານບົດບັນທຶກຮ່ວມລະຫວ່າງ ຄວສຜ ກັບ 4 ພະແນກການດັ່ງກ່າວ ເຊິ່ງບົດບັນທຶກປະກອບມີ 4 ໝວດ, 17 ມາດຕາ ໄດ້ກຳຈຸດປະສົງ, ການປະສານງານ, ຫລັກການປະສານງານ, ຂອບເຂດການນຳໃຊ້, ເນື້ອໃນການປະສານງານ ໃຫ້ມີຄວາມເປັນເອກະພາບບົນພື້ນຖານແນວທາງນະໂຍບາຍຂອງພັກ-ລັດ, ລັດຖະທຳມະນູນ ແລະ ກົດໝາຍ; ເຄົາລົບສິດສະເໝີພາບ, ເຄື່ອນໄຫວຕາມຫລັກການ, ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງກັນ ແລະ ກັນ ສ້າງຄວາມເຊື່ອໝັ້ນ ໃຫ້ແກ່ປະຊາຊົນບັນດາເຜົ່າ.

ຈາກນັ້ນ, ຜູ້ເຂົ້າຮ່ວມພິທີໄດ້ປະກອບຄຳຄິດຄຳເຫັນໃສ່ບົດບັນທຶກຮ່ວມດັ່ງກ່າວເພີ່ມເຕີມບາງບັນຫາ ແລະ ໄດ້ເຊັນບົດບັນທຶກຮ່ວມດັ່ງກ່າວຢ່າງເປັນທາງການ.

ການເຊັນບົດບັນທຶກຮ່ວມຄັ້ງນີ້ ແມ່ນເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວການຈັດຕັ້ງປະຕິບັດໜ້າທີ່ການເມືອງຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທັງເປັນບ່ອນອີງໃຫ້ແກ່ການພົວພັນປະສານງານ ລະຫວ່າງ ຄວສຜ ສພຂ ກັບ 4 ພະແນກການ ໃນການຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ໄດ້ຮັບການຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດສູງ, ເຮັດໃຫ້ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ ແລະ ມີສະຖຽນລະພາບທາງດ້ານການເມືອງ.

ທ້າຍພິທີ, ປະທານກອງປະຊຸມໄດ້ມີຄຳເຫັນ ເນັ້ນໜັກໃຫ້ບັນດາພະແນກການນຳເອົາເນື້ອໃນຈິດໃຈຂອງການເຊັນບົດບັນທຶກຮ່ວມຄັ້ງນີ້ ໄປຈັດຕັ້ງເຜີຍແຜ່ໃຫ້ແກ່ພະນັກງານພາຍໃນກົມກອງຂອງຕົນຮັບຮູ້ ແລະ ເຂົ້າໃຈຕື່ມອີກ.

(ແສງພອນ ອິນນະລັງ)

# ກອງປະຊຸມສະໄໝວິສາມັນ ຄັ້ງທີ 2 ສພຂ ຫລວງນໍ້າທາ



(ສພຊ) ກອງປະຊຸມສະໄໝວິສາມັນ ຄັ້ງທີ 2 ຂອງສະພາປະຊາຊົນແຂວງ (ສພຂ) ຫລວງນໍ້າທາ ຊຸດທີ II ໄດ້ໄຂຂຶ້ນໃນຕອນເຊົ້າວັນທີ 11 ຕຸລາ 2022 ຢູ່ທີ່ສະໂມສອນຂອງແຂວງ ພາຍໃຕ້ການເປັນປະທານຂອງທ່ານ ຄຳຟອງ ອິນມານີ ປະທານ ສພຂ ໂດຍການເຂົ້າຮ່ວມຂອງທ່ານ ຄຳໄຫລ ສີປະເສີດ ເຈົ້າແຂວງໆຫລວງນໍ້າທາ; ມີການນຳຂອງແຂວງ, ອະດີດການນຳແຂວງ, ອະດີດ ສສຊ, ອະດີດ ສສຂ, ຫົວໜ້າ-ຮອງຫົວໜ້າພະແນກການ, ຄະນະຮັບຜິດຊອບສ້າງຮ່າງຂໍ້ຕົກລົງເຈົ້າແຂວງ ພ້ອມດ້ວຍແຂກຖືກເຊີນເຂົ້າຮ່ວມ 100 ກວ່າຄົນ.

ກອງປະຊຸມສະໄໝວິສາມັນຄັ້ງນີ້, ໄດ້ຮັບຟັງ ແລະ ໄດ້ຄົ້ນຄວ້າ, ພິຈາລະນາ, ຮັບຮອງເອົາຮ່າງຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການກຳນົດລາຄາຫົວໜ່ວຍຊົດເຊີຍຜົນກະທົບຈາກໂຄງການພັດທະນາຕົວເມືອງທັນສະໄໝ ແລະ ເປັນມິດຕໍ່ສິ່ງແວດລ້ອມ ຢູ່ເຂດນາເຕີຍ ເມືອງ ແລະ ແຂວງຫລວງນໍ້າທາ ເຊິ່ງລວມທັງໝົດມີ 7 ໝວດ, 25 ມາດຕາ. ພ້ອມນັ້ນ, ຜູ້ແທນກອງປະຊຸມໄດ້ຍົກສູງຄວາມຮັບຜິດຊອບສຸມໃສ່ປະກອບຄຳຄິດເຫັນຕໍ່ຮ່າງຂໍ້ຕົກລົງເຈົ້າແຂວງດັ່ງກ່າວ ຢ່າງມີຈຸດສຸມເພື່ອເຕັມຄວາມຮັບຜິດຊອບທາງປະຊາທິປະໄຕເຮັດໃຫ້ຮ່າງຂໍ້ຕົກລົງເຈົ້າແຂວງ ມີເນື້ອໃນຖືກຕ້ອງ, ຮັດກຸມ, ສົມບູນຂຶ້ນກວ່າເກົ່າ ແລະ ສາມາດພິຈາລະນາ, ຮັບຮອງເອົາໃນກອງປະຊຸມຄັ້ງນີ້ ເພື່ອນຳໄປຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນປະໂຫຍດສູງສຸດໃນຕໍ່ໜ້າ; ນອກນັ້ນ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ ຍັງໄດ້ຍົກສູງຄວາມຮັບຜິດຊອບທາງດ້ານການເມືອງ, ຕາມພາລະບົດບາດ, ໃນນາມເປັນຕົວແທນແຫ່ງສິດຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ໄດ້ລົງຄະແນນສຽງຮັບຮອງເອົາຮ່າງຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການກຳນົດລາຄາຫົວໜ່ວຍຊົດເຊີຍຜົນກະທົບຈາກໂຄງການພັດທະນາຕົວເມືອງທັນສະໄໝ ແລະ ເປັນມິດຕໍ່ສິ່ງແວດລ້ອມ ຢູ່ເຂດນາເຕີຍ ເມືອງ ແລະ ແຂວງຫລວງນໍ້າທາ ດ້ວຍຄະແນນສຽງເປັນເອກະສັນ ແລະ ກອງປະຊຸມໄດ້ປິດລົງຢ່າງເປັນທາງການດ້ວຍຜົນສຳເລັດອັນຈົບງາມໃນຕອນເຊົ້າຂອງວັນດຽວກັນ.

ໂຄງການພັດທະນາເມືອງທັນສະໄໝ ແລະ ເປັນມິດຕໍ່ສິ່ງແວດລ້ອມ ຢູ່ເຂດນາເຕີຍ ເມືອງ ແລະ ແຂວງຫລວງນໍ້າທາແມ່ນໂຄງການພັດທະນາຂະໜາດໃຫຍ່, ເປັນບູລິມະສິດໜຶ່ງຂອງລັດຖະບານ ແລະ ເປັນໂຄງການທີ່ນອນຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ເຊິ່ງພັກ-ລັດໄດ້ເອົາໃຈໃສ່ຊຸກຍູ້ສົ່ງເສີມເພື່ອສ້າງເປັນທ່າແຮງໃນ ການເຕີບໂຕທາງດ້ານເສດຖະກິດ-ສັງຄົມຂອງຊາດ ກໍຄືຂອງແຂວງ.

# ມອບເຄື່ອງບັນເທົາທຸກໃຫ້ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໄພພິບັດທາງທຳມະຊາດ



(ສພຊ) ວັນທີ 14 ຕຸລາ ນີ້, ທ່ານ ນາງ ຄຳເສັງ ທຸມມະວົງສາ ຮອງປະທານສະພາປະຊາຊົນແຂວງເຊກອງ ພ້ອມດ້ວຍຄະນະສະມາຊິກສະພາປະຊາຊົນແຂວງເຊກອງ ປະຈຳເຂດເລືອກຕັ້ງເມືອງລະມາມ ແຂວງເຊກອງ ໄດ້ເຄື່ອນໄຫວຕິດຕາມພື້ນທີ່ໄດ້ຮັບຜົນກະທົບຈາກໄພພິບັດທາງທຳມະຊາດ (ພະຍຸໂນຣູ) ຢູ່ເມືອງລະມາມ ພ້ອມທັງໄດ້ນຳເອົາເຄື່ອງຊ່ວຍເຫຼືອເພື່ອບັນເທົາທຸກໃຫ້ແກ່ພໍ່ແມ່ປະຊາຊົນ 3 ບ້ານທີ່ໄດ້ຮັບຜົນກະທົບເປັນຕົ້ນບ້ານກະຊັ້ງກາງ, ບ້ານນໍ້າຫຽງ ແລະ ບ້ານຫ້ວຍອາວັງຊ້າງ ເຊິ່ງໄພພິບັດດັ່ງກ່າວ ໄດ້ກໍ່ໃຫ້ເກີດຄວາມເສຍຫາຍຢ່າງໜັກໜ່ວງຕໍ່ຊີວິດ ແລະ ຊັບສິນຂອງພໍ່ແມ່ປະຊາຊົນ ເປັນຕົ້ນແມ່ນບ້ານເຮືອນເປ່ເພ, ພື້ນທີ່ທຳການຜະລິດ, ສັດລ້ຽງ ແລະ ເຄື່ອງໃຊ້ສອຍຕ່າງໆ.

ຂະນະດຽວກັນ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງທ່າແຕງ ນຳໂດຍທ່ານ ແສງລາຕີ ຫຼອມຍະເດດ ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງທ່າແຕງ ພ້ອມດ້ວຍຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງດັ່ງກ່າວ ກໍໄດ້ນຳເອົາເຄື່ອງອຸປະໂພກ-ບໍລິໂພກ ພ້ອມດ້ວຍເງິນສົດ ຈຳນວນໜຶ່ງ ໄປມອບໃຫ້ແກ່ຄອບຄົວທີ່ໄດ້ຮັບເຄາະຮ້າຍ (ເສຍຊີວິດ) 1 ຄົນ ຈາກໄພພິບັດທາງທຳມະຊາດ (ພະຍຸໂນຣູ) ຢູ່ບ້ານຍຶກທົ່ງ ເມືອງທ່າແຕງ ທັງນີ້, ກໍເພື່ອແບ່ງເບົາຄວາມທຸກໂສກ ແລະ ໄຫວ້ອາໄລຕໍ່ດວງວິນຍານຂອງຜູ້ເສຍຊີວິດຈົ່ງໄປສູ່ສຸຄະຕິ.

ສຳລັບວັດຖຸປັດໄຈ ທີ່ໄດ້ນຳໄປຊ່ວຍເຫຼືອໃນຄັ້ງນີ້ ແມ່ນໄດ້ຮັບການສະໜັບສະໜູນຈາກບັນດາສະມາຄົມຄົນຫວຽດນາມປະຈຳຢູ່ແຂວງເຊກອງ ແລະ ບັນດາບໍລິສັດທີ່ມາລົງທຶນພັດທະນາຢູ່ແຂວງເຊກອງ ຄື: ບໍລິສັດວິລາຂາອອກ-ຂາເຂົ້າຈຳກັດ ແລະ ບໍລິສັດ ວິນນີຂາອອກ-ຂາເຂົ້າຈຳກັດ.

(ນັກຂ່າວ ສພຂ ເຊກອງ)

# ຮອງປະທານ ສພຂ ຜົ້ງສາລີ ຍົກໃຫ້ເຫັນການຕິດຕາມ, ຊຸກຍູ້ການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ

ຮຽບຮຽງໂດຍ: ນາງ ສຸກສົມພອນ ແກ້ວແສງພະຈັນ



ໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ (ສພຂ) ຜົ້ງສາລີ ຊຸດທີ II ໃນລະຫວ່າງວັນທີ 23-25 ສິງຫາ 2022 ທີ່ເມືອງບຸນເໜືອ ແຂວງຜົ້ງສາລີ, ທ່ານ ທຸມເຜັງ ຈອມວິສານ ຮອງປະທານ ສພຂ ໄດ້ໃຫ້ສຳພາດຕໍ່ສື່ມວນຊົນ ໂດຍທ່ານໄດ້ສະແດງຄວາມຂອບໃຈຕໍ່ສື່ມວນຊົນ ທີ່ໄດ້ໃຫ້ໂອກາດສຳພາດ ກ່ຽວກັບຄວາມສຳຄັນຂອງກອງປະຊຸມສະໄໝມັນເທື່ອທີ 3 ຂອງ ສພຂ ຊຸດທີ II ແລະ ການຕິດຕາມ, ຊຸກຍູ້ພາກສ່ວນທີ່ກ່ຽວຂ້ອງໃນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍຂອງແຂວງຜົ້ງສາລີ ທ່ານໄດ້ກ່າວວ່າ: ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II ແມ່ນກອງປະຊຸມສະຫຼຸບຕີລາຄາການເຄື່ອນໄຫວປະຕິບັດໜ້າທີ່ວຽກງານໃນຕະຫຼອດໄລຍະ 6 ເດືອນຕົ້ນປີຜ່ານມາ ຕາມກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ເຊິ່ງແມ່ນກອງປະຊຸມທີ່ມີຄວາມໝາຍຄວາມສຳຄັນຕໍ່ກັບການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ, ໃນການເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງບັນປະຊາຊົນບັນດາເຜົ່າ ຢູ່ຂັ້ນທ້ອງຖິ່ນ ໂດຍສະເພາະການປະຕິບັດໜ້າທີ່ທາງດ້ານນິຕິກຳ, ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ແລະ ດ້ານການຕິດຕາມກວດກາການເຄົາລົບ, ປະຕິບັດລັດຖະທຳມະນູນ ແລະ ກົດໝາຍຂອງບັນດາອົງການລັດຢູ່ໃນຂັ້ນທ້ອງຖິ່ນ; ເນື້ອໃນຂອງກອງປະຊຸມຄັ້ງນີ້ ແມ່ນໄດ້ຍົກໃຫ້ເຫັນບັນດາຜົນສຳເລັດໃນການຈັດຕັ້ງປະຕິບັດວຽກງານແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ບັນດາບັນຫາສຳຄັນພື້ນຖານຂອງແຂວງ ພ້ອມທັງໄດ້ຍົກໃຫ້ເຫັນດ້ານອ່ອນຂໍ້ຄົງຄ້າງ ໃນການຈັດຕັ້ງປະຕິບັດບັນດາຄາດໝາຍຕາມມະຕິກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ມະຕິກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ຊຸດທີ II. ສະນັ້ນ, ໃນນາມສະມາຊິກສະພາປະຊາຊົນແຂວງ ແລະ ໃນນາມເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ມີຄວາມຮູ້ສຶກເປັນກຽດຢ່າງສູງ ທີ່ໄດ້ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້.

ເພື່ອເພີ່ມທະວີຄວາມສັກສິດແຫ່ງການຄຸ້ມຄອງເສດຖະກິດ-ສັງຄົມ ແລະ ປັບປຸງອຳນາດລັດຂັ້ນທ້ອງຖິ່ນ ໂດຍສະເພາະຢູ່ແຂວງຜົ້ງສາລີ, ສພຂ ກໍໄດ້ມີສ່ວນຮ່ວມໃນການຕິດຕາມກວດກາ, ຊຸກຍູ້ພາກສ່ວນກ່ຽວຂ້ອງໃນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ຢ່າງເປັນເຈົ້າການ. ນັບແຕ່ກອງປະຊຸມຄັ້ງປະຖົມມະລຶກຂອງ ສພຂ ຊຸດທີ II ເຖິງແມ່ນວ່າສະພາບແວດລ້ອມຫລາຍດ້ານບໍ່ໄດ້ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງ, ການເຄື່ອນໄຫວປະຕິບັດໜ້າທີ່ວຽກງານເປັນຕົ້ນແມ່ນບັນຫາສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ບັນຫາທາງດ້ານເສດຖະກິດ-ການເງິນ ກໍຄືສະພາບແວດລ້ອມໃນຕົວ ແລະ ນອກຕົວ ເຊິ່ງຜົນກະທົບຫຼາຍດ້ານ. ເຖິງຢ່າງໃດກໍຕາມ ແຕ່ຍ້ອນການນຳພາ-ຊີ້ນຳຂອງ ສພຂ ກໍຄືສະມາຊິກສະພາປະຊາຊົນຂັ້ນແຂວງໄດ້ມີຄວາມພະຍາຍາມຢ່າງສຸດຂີດ ແລະ ເຄື່ອນໄຫວປະຕິບັດໜ້າທີ່ວຽກງານ ຢ່າງເປັນເຈົ້າການ ແລະ ມີຄວາມຮັບຜິດຊອບສູງ ເປັນຕົ້ນແມ່ນເອົາໃຈໃສ່ຊີ້ນຳບັນດາຄະນະກຳມະການ ເປັນເຈົ້າການປະສານສົມທົບກັບສະພາແຫ່ງຊາດ, ອົງການປົກຄອງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ, ປະກອບຄຳຄິດຄຳເຫັນຕໍ່ການສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ, ມະຕິ ແລະ ຂໍ້ຕົກລົງຕ່າງໆຕາມພາລະບົດບາດ ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນກົດໝາຍ ໂດຍສະເພາະແມ່ນການຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາແຜນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ຕາມການສະເໜີຂອງອົງການປົກຄອງແຂວງ ເຊິ່ງໃນກອງປະຊຸມຄັ້ງປະຖົມມະລຶກຂອງ ສພຂ ຊຸດທີ II ໄດ້ອອກມະຕິຮັບຮອງເອົາແຜນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ລວມທັງໝົດ 7 ສະບັບ, ໃນນັ້ນ ສ້າງໃໝ່ 5 ສະບັບ ແລະ ປັບປຸງ 2 ສະບັບຄື:

**ນິຕິກຳສະເໜີສ້າງໃໝ່ 5 ສະບັບ:** ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການຈັດງານບຸນປະເພນີຕ່າງໆ ຢູ່ແຂວງຜົ້ງສາລີ; ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍກອງທຶນຄຸ້ມຄອງໄພພິບັດຂັ້ນແຂວງ; ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍກອງທຶນພັດທະນາກິລາ-ກາຍຍະກຳຂອງແຂວງຜົ້ງສາລີ; ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການຮັບຮອງເອົາແຜນຜັງຕົວເມືອງຢູ່ຊົນນະບົດຂອງແຂວງຜົ້ງສາລີ ແລະ ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການຄຸ້ມຄອງການປຸກສ້າງໃນທົ່ວແຂວງຜົ້ງສາລີ.

**ນິຕິກຳສະເໜີປັບປຸງ 2 ສະບັບ:** ບົດແນະນຳຂອງເຈົ້າແຂວງ ສະບັບເລກທີ 02/ຈຂ.ຜລ, ລົງວັນທີ 12 ກຸມພາ 2017 ກ່ຽວກັບການຈັດຕັ້ງປະຕິບັດວຽກງານສ່ວຍສາອາກອນ (ສະເໜີປ່ຽນເປັນຂໍ້ຕົກລົງເຈົ້າແຂວງ) ແລະ ຄຳສັ່ງຂອງເຈົ້າແຂວງ ສະບັບເລກທີ 03/ຈຂ.ຜລ, ລົງວັນທີ 12 ກຸມພາ 2017 ວ່າດ້ວຍການຕ້ານ, ສະກັດກັ້ນປະກົດການຫຍໍ້ທໍ້ໃນສັງຄົມ. (ປ່ຽນເປັນຂໍ້ຕົກລົງ ວ່າດ້ວຍການສະກັດກັ້ນ, ຕ້ານ ແລະ ແກ້ໄຂບັນຫາຢາເສບຕິດຢູ່ແຂວງຜົ້ງສາລີ).

ໃນ 7 ນິຕິກຳ ຕາມແຜນການສ້າງ ແລະ ປັບປຸງນັ້ນ, ໄດ້ພິຈາລະນາ, ຮັບຮອງຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍກອງທຶນຄຸ້ມຄອງໄພພິບັດຂັ້ນແຂວງ ໃນກອງປະຊຸມສະໄໝສາມັນເທື່ອທີ 2 ສພຂ ຊຸດທີ II ຄັ້ງທີ່ຜ່ານມາ ແລະ ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II ໃນຄັ້ງນີ້ ຄົ້ນຄວ້າພິຈາລະນາຕື່ມລວມມີ 4 ສະບັບ ຄື: ຂໍ້ຕົກລົງ ຂອງເຈົ້າແຂວງ ວ່າດ້ວຍການຈັດງານບຸນປະເພນີຕ່າງໆ ຢູ່ແຂວງຜົ້ງສາລີ (ສ້າງໃໝ່); ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍກອງທຶນພັດທະນາກິລາ-ກາຍຍະກຳ ຂອງແຂວງຜົ້ງສາລີ (ສ້າງໃໝ່); ຂໍ້ຕົກລົງຂອງເຈົ້າແຂວງວ່າດ້ວຍການເພີ່ມທະວີໃນການສະກັດກັ້ນ, ຕ້ານ ແລະ ແກ້ໄຂບັນຫາຢາເສບຕິດຢູ່ແຂວງຜົ້ງສາລີ (ປັບປຸງ) ແລະ ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການກຳນົດຫົວໜ່ວຍລາຄາຊົດເຊີຍຈາກຜົນກະທົບໃນການພັດທະນາພື້ນຖານໂຄງລ່າງຢູ່ແຂວງຜົ້ງສາລີ (ຂໍ້ຕົກລົງສະບັບນີ້ ແມ່ນນິຕິກຳໃຕ້ກົດໝາຍ ສະເໜີເພີ່ມໃໝ່).

ທ່ານໃຫ້ຮູ້ຕື່ມວ່າ: ເມື່ອທຽບໃສ່ແຜນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍແມ່ນ ບັນລຸໄດ້ 71,42% ເຊິ່ງແມ່ນໝາກຜົນລວມຂອງການຊີ້ນຳຂອງຄະນະປະຈຳ ສພຂ ແລະ ການໃກ້ຊິດຕິດແທດກັບພາກສ່ວນທີ່ກ່ຽວຂ້ອງຢ່າງເປັນເຈົ້າໃນການຕິດຕາມ, ຊຸກຍູ້ໃຫ້ພາກສ່ວນຕ່າງໆເອົາໃຈໃສ່ໃນການກອບສ່ວນສ້າງລັດທີ່ປົກຄອງດ້ວຍກົດໝາຍຂອງປະຊາຊົນ ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນຢ່າງແທ້ຈິງ ແລະ ໃນຕໍ່ໜ້າ ສພຂ ຍັງຈະສືບຕໍ່ຕິດຕາມ, ຊຸກຍູ້ພາກສ່ວນທີ່ກ່ຽວ ໃນການສ້າງນິຕິກຳທີ່ຍັງຄ້າງຕາມແຜນການສ້າງ ແລະ ປັບປຸງໄດ້ຮັບຮອງ ເປັນຕົ້ນແມ່ນຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການຮັບຮອງເອົາແຜນຜັງຕົວເມືອງຢູ່ຊົນນະບົດຂອງແຂວງຜົ້ງສາລີ ແລະ ຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການຄຸ້ມຄອງການປຸກສ້າງ ໃນທົ່ວແຂວງຜົ້ງສາລີ ໃຫ້ບັນລຸຕາມແຜນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ.

ພວກເຮົາໄດ້ຮັບຮູ້ນຳກັນແລ້ວວ່າ ໃນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ແມ່ນມີຄວາມຈຳເປັນພາວະວິໄສ ຕໍ່ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ເພື່ອເປັນເຄື່ອງມື ແລະ ເປັນບ່ອນອີງໃຫ້ແກ້ທຸກພາກສ່ວນ, ຂະແໜງການກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານໃຫ້ມີຄວາມຖືກຕ້ອງ, ສອດຄ່ອງກັບສະພາບຄວາມເປັນຈິງຢູ່ໃນທ້ອງຖິ່ນຮາກຖານ ແລະ ທັງຮັບປະກັນການໃຫ້ການປັບປຸງອຳນາດລັດຂັ້ນທ້ອງຖິ່ນມີຄວາມເຂັ້ມແຂງຂຶ້ນເທື່ອລະກ້າວ ແນໃສ່ໃຫ້ແຂວງຜົ້ງສາລີ ມີສະຖຽນສະພາບທາງດ້ານເມືອງ, ປະຊາຊົນຮັ່ງມີຜາສຸກ, ແຂວງຜົ້ງສາລີມີຄວາມມັ່ງຄັ່ງເຂັ້ມແຂງ, ສັງຄົມມີຄວາມສາມັກຄີເປັນປຶກແຜ່ນ, ມີປະຊາທິປະໄຕ, ສີວິໄລ ແລະ ຍຸຕິທຳ.

# ສສຊ, ສສຂ ເຂດ 13 ຕິດຕາມກວດກາການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນ ເທື່ອທີ 2-3



(ສພຊ) ໃນລະຫວ່າງວັນທີ 12-14 ຕຸລາ 2022 ສະມາຊິກສະພາແຫ່ງຊາດ (ສສຊ) ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງ (ສສຂ) ສະຫວັນນະເຂດ ປະຈຳເຂດເລືອກຕັ້ງເມືອງ ເຊິ່ງນຳໂດຍທ່ານ ຄຳຜັນ ຄູນສະຫວັນ ຮອງປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 13 ທັງເປັນຮອງປະທານສະພາປະຊາຊົນແຂວງ ພ້ອມບັນດາທ່ານ ສສຊ, ສສຂ ໄດ້ເຄື່ອນໄຫວຕິດຕາມການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນເທື່ອທີ 2-3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ ຢູ່ເມືອງນອງ, ເມືອງເຊໂປນວິລະບູລີ, ເມືອງພີນ, ເມືອງພະລານໄຊ ແລະ ດ່ານສາກົນແດນສະຫວັນ ໂດຍໄດ້ຮັບການຕ້ອນຮັບຈາກບັນດາທ່ານເຈົ້າເມືອງ-ຮອງເຈົ້າເມືອງ, ຄະນະປະຈຳພັກເມືອງ, ຫົວໜ້າດ່ານສາກົນແດນສະຫວັນ, ບັນດາຫົວໜ້າຫ້ອງການ ແລະ ພະນັກງານຫຼັກແຫຼ່ງຂອງເມືອງກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ໃນການເຄື່ອນໄຫວ, ໄດ້ຮັບຟັງການລາຍງານສະພາບການພັດທະນາເສດຖະກິດ-ສັງຄົມຂອງແຕ່ລະເມືອງ ໂດຍສັງເຂບ. ຈາກນັ້ນ, ປະທານກອງປະຊຸມກໍໄດ້ເປີດໂອກາດໃຫ້ບັນດາທ່ານ ສສຊ, ສສຂ ຂອງແຕ່ລະຄະນະກຳມະການທີ່ຕິດຕາມໃນຄະນະ ໄດ້ແລກປ່ຽນ ແລະ ເຈາະຈີ້ມຂອງແຕ່ລະຂົງເຂດ ເປັນຕົ້ນແມ່ນການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດບັນດາມະຕິກອງປະຊຸມສະພາແຫ່ງຊາດ ແລະ ມະຕິກອງປະຊຸມສະພາປະຊາຊົນແຂວງ ທີ່ໄດ້ຮັບຮອງເອົາໃນກອງປະຊຸມ ໃຫ້ມີຜົນສຳເລັດຕາມລະດັບຄາດຫມາຍທີ່ວາງໄວ້; ການຊຸກຍູ້ ການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ບັນດາມະຕິຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ ໃນໄລຍະຜ່ານມາ ແລະ ເກັບກຳບັນຫາພົ້ນເດັ່ນຕ່າງໆ ທັງເປັນການລົງໃກ້ຊິດຕິດແທດກັບຮາກຖານ, ກຳໄດ້ຂໍ້ມູນຕົວຈິງ ໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານ ຂອງພາກສ່ວນທີ່ກ່ຽວຂ້ອງ ຢູ່ບັນດາ 5 ເມືອງ ພ້ອມທັງເປັນຂໍ້ມູນໃຫ້ແກ່ ສສຊ ປະຈຳເຂດເລືອກຕັ້ງທີ 13 ແລະ ສສຂ ທີ່ຈະເຂົ້າຮ່ວມໃນກອງປະຊຸມສະໄຫມສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ທີ່ຈະໄດ້ຈັດຂຶ້ນໃນມໍ່ໆນີ້ ເພື່ອເຮັດໃຫ້ການຕິດຕາມກວດກາຢູ່ກອງປະຊຸມມີປະສິດທິຜົນ, ຮູ້ໄດ້ເຖິງສະພາບລວມດ້ານຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ ກໍຄືຢູ່ບັນດາ 5 ເມືອງ ໃຫ້ບັນລຸຕາມລະດັບຄາດໝາຍທີ່ກຳນົດໄວ້.

(ນັກຂ່າວ ສພຂ ສະຫວັນນະເຂດ)

# ອົບຮົມສ້າງຄວາມເຂັ້ມແຂງໃຫ້ ສສຂ ແລະ ພະນັກງານຊ່ວຍວຽກ



(ສພຊ) ລະຫວ່າງວັນທີ 6-7 ຕຸລາ 2022 ໄດ້ຈັດກອງປະຊຸມເຝິກອົບຮົມ ໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ (ສສຂ) ຊຸດທີ II ແລະ ພະນັກງານຊ່ວຍວຽກສະພາປະຊາຊົນແຂວງອຸດົມໄຊ ຢູ່ສະໂມສອນຫ້ອງວ່າການເມືອງຮຸນ ແຂວງອຸດົມໄຊ ພາຍໃຕ້ການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ປະທານສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ; ມີບັນດາທ່ານວິທະຍາກອນຈາກກົມຄຳຮ້ອງຂໍຄວາມເປັນທຳ ສະພາແຫ່ງຊາດ, ກົມກົດໝາຍ ກະຊວງຍຸຕິທຳ, ຄະນະປະຈຳ ສພຂ, ສສຂ ປະຈຳເຂດເລືອກຕັ້ງ 7 ເມືອງ, ຄະນະເລຂາທິການ ສພຂ ແລະ ພະນັກງານຊ່ວຍວຽກ ສພຂ ເຂົ້າຮ່ວມ.

ຕະຫລອດໄລຍະເວລາ 2 ວັນໃນການເຝິກອົບຮົບ, ບັນດາທ່ານວິທະຍາກອນໄດ້ເອົາໃຈໃສ່ຕໍ່ກັບການບັນລະຍາຍບົດຮຽນຕ່າງໆຢ່າງຕັ້ງໜ້າ, ປະຕິບັດຕາມແຜນການເຝິກອົບຮົມ. ພ້ອມນັ້ນ, ບັນດາສຳມະນາກອນໄດ້ສຸມໃສ່ໃນການຄົ້ນຄວ້າບົດຮຽນ ແລະ ມີຄຳຖາມແລກປ່ຽນບົດຮຽນກັບບັນດາທ່ານວິທະຍາກອນ ເພື່ອໃຫ້ມີຄວາມກະຈ່າງແຈ້ງ, ຢ່າງລະອຽດ ພ້ອມທັງເຫັນໄດ້ໃນພາກພຶດຕິກຳຕົວຈິງ.

ໃນຕອນທ້າຍ, ປະທານກອງປະຊຸມໄດ້ມີຄຳເຫັນສະແດງຄວາມຂອບໃຈຕໍ່ວິທະຍາກອນທີ່ມາຈາກສູນກາງ ໄດ້ເສຍສະຫລະເວລາ ເຂົ້າຮ່ວມແບ່ງປັນບົດຮຽນ ແລະ ປະສົບການ ໃຫ້ແກ່ ສສຂ ແລະ ພະນັກງານຊ່ວຍວຽກ ສພຂ ອຸດົມໄຊ, ຫວັງຢ່າງຍິ່ງຜົນສຳເລັດການເຝິກອົບຮົມໃນຄັ້ງນີ້ ຈະເປັນຂີດໝາຍອັນສຳຄັນ ໃຫ້ແກ່ ສສຂ ແລະ ພະນັກງານຊ່ວຍວຽກ ສພຂ. ພ້ອມນີ້ ທ່ານຍັງໄດ້ຮຽກຮ້ອງສຳມະນາກອນຈົ່ງນຳເອົາບົດຮຽນດັ່ງກ່າວໄປໝູນໃຊ້ຕໍ່ກັບວຽກງານ ສພຂ ໃຫ້ມີປະສິດພາບປະສິດທິຜົນ ແລະ ປາກົດຜົນເປັນຈິງຢ່າງເປັນຮູບປະທຳ.

(ສີແຫວງ ສີບຸນເຮືອງ)

ສຽງຂອງສະພາແຫ່ງຊາດ ຜູ້ແທນປະຊາຊົນ PHOUTHEN PASAXON





## ສຸກສະບາຍຫາຍໂຣຄາ

# ໝາກໄມ້ພື້ນບ້ານຕ້ານພະຍາດ

ແປ ແລະ ຮຽບຮຽງໂດຍ: ສາວແວ່ນ



ບ້ານເຮົາມີໝາກໄມ້ຫລາກຫລາຍຊະນິດ ທີ່ມີລາຄາບໍ່ແພງ ທັງມີປະໂຫຍດ ແລະ ມີຄຸນຄ່າທາງໂພຊະນາການຫລາຍຕໍ່ຮ່າງກາຍ ເພາະໄດ້ມີການວິເຄາະ, ວິໄຈ ແລະ ພິສູດທາງວິທະຍາສາດແລ້ວວ່າ ສານທີ່ມີໃນໝາກໄມ້ ມີສັບພະຄຸນເປັນຢາຊ່ວຍກະຕຸ້ນການເຮັດວຽກຂອງລະບົບຕ່າງໆ ລວມທັງເສີມສ້າງພູມຕ້ານທານນຳອີກ; ມື້ນີ້, ໃນຄໍລຳສຸກສະບາຍຫາຍໂລຄາ ຈະມາແນະນຳໝາກໄມ້ພື້ນບ້ານທີ່ຊອກກິນໄດ້ງ່າຍ ແຕ່ມີສັບພະຄຸນຫລາຍ ຄື:

**1. ໝາກສີດາ:** ເປັນໝາກໄມ້ທີ່ຊອກກິນງ່າຍ ລາຄາຖືກ ແລະ ມີຕະຫລອດປີ ເປັນໝາກໄມ້ທີ່ມີວິຕາມິນຊີ, ເສັ້ນໄຍ ແລະ ສານຕ້ານອະນຸມູນອິດສະລະຫລາຍ ທີ່ຊ່ວຍກະຕຸ້ນການເຮັດວຽກຂອງເມັດເລືອດຂາວ ເຮັດໃຫ້ຮ່າງກາຍມີພູມຕ້ານທານກັບພະຍາດຫລາຍຂຶ້ນ; ຊ່ວຍສ້າງ ແລະ ປ້ອງກັນອາການເລືອດອອກຕາມຫວ່າງແຂ້ວໄດ້;

**2. ໝາກເຟືອງ:** ມີຄຸນຄ່າສານອາຫານຢ່າງຫລວງຫລາຍ ເພາະອຸດົມໄປດ້ວຍວິຕາມິນຊີ, ວິຕາມິນເອ, ເສັ້ນໄຍ, ຟອດສະຟໍຣັດ ແລະ ແຄວຊຽມ ຊ່ວຍປິ່ນປົວອາການເລືອດອອກຕາມຫວ່າງແຂ້ວ ແລະ ເປັນຢາລະບາຍເພື່ອແກ້ອາການຖອກທ້ອງ ແລະ ຊ່ວຍຂັບຂີ້ກະເທີ່;

**3. ໝາກພິລາ:** ເປັນໝາກໄມ້ທີ່ລົດຊາດສົ້ມ-ຫວານ ອອກລິດເປັນຢາບຳລຸງກຳລັງ, ຊ່ວຍບັນເທົາອາການເຈັບຄໍ, ເລືອດຈາງ, ເຈັບກະເພາະ, ຊ່ວຍຫ້າມເລືອດ, ປິ່ນປົວບາດແຜ, ຂັບໄລ່ແມ່ພະຍາດໃນລຳໄສ້ ແລະ ແກ້ອາການຖອກທ້ອງ; ນອກນັ້ນ, ຍັງຊ່ວຍຫລຸດອາການປວດຮາກໃນແມ່ມານໄດ້ ດ້ວຍການດື່ມນ້ຳໝາກພິລາຕອນເຊົ້າ ມື້ລະ 1 ຈອກ;

**4. ໝາກຫຸ່ງ:** ເປັນໝາກໄມ້ທີ່ແຊບ ແລະ ຄົນນິຍົມກິນຫລາຍໃນບ້ານເຮົາ ໂດຍສະເພາະເມນູຕຳ; ໝາກຫຸ່ງອຸດົມໄປດ້ວຍວິຕາມິນຊີ, ເບຕາແຄໂລທີນ, ໄລໂຄພີນ, ແມກນີຊຽມ, ທອງແດງ, ໂພແທດຊຽມ ແລະ ເສັ້ນໄຍ ເມື່ອກິນເປັນປະຈຳຈະຊ່ວຍບຳລຸງຜິວໃຫ້ຊຸ່ມຊື່ນ; ເສັ້ນໄຍອາຫານຊ່ວຍໃນການຂັບຖ່າຍ ກຳຈັດໄຂມັນໃນລຳໄສ້, ຊ່ວຍໃຫ້ລຳໄສ້ສະອາດ ສາມາດດູດຊຶມອາຫານໄດ້ດີຂຶ້ນ.

**5. ໝາກພຸກ:** ປະກອບດ້ວຍເພກຕິກ (Pectin) ຫລາຍ ທັງຊ່ວຍຫລຸດຄໍເລສເຕີຣໍໃນເລືອດ ແລະ ໂມໂນໂຫບິນ ທີ່ຊ່ວຍໃນການຈັບສານກໍມະເຮັງ; ພ້ອມນັ້ນ, ຖ້າກິນໝາກພຸກຫລັງອາຫານ ຈະຊ່ວຍຂັບໄລ່ກາສໃນກະເພາະ ແລະ ລຳໄສ້, ຊ່ວຍໃຫ້ລະບົບຍ່ອຍອາຫານເຮັດວຽກໄດ້ຢ່າງມີປະສິດທິພາບ.

**6. ໝາກຂາມ:** ມີສານແອນທາຄິວນິນ (Antraquinone) ທີ່ຊ່ວຍໃຫ້ປະຈຳເດືອນມາປົກກະຕິ ພ້ອມທັງມີອາຊິດອິນຊີຫລາຍຊະນິດ, ເຊັ່ນ: ອາຊິດທາຣາຕິດ (Tartaric Acid) ແລະ ອາຊິດຊິຕິດ (Citric Acid) ມີລິດເປັນຢາລະບາຍເລັກນ້ອຍ, ມີເສັ້ນໄຍອາຫານທີ່ຊ່ວຍໃຫ້ການຂັບຖ່າຍສະດວກ.

**7. ໝາກຍົມ:** ເປັນໄມ້ທ້ອງຖິ່ນ ທີ່ໃຫ້ລົດຊາດສົ້ມ-ຝາດ ແຕ່ອຸດົມດ້ວຍທາດແຄວຊຽມ, ຟົດສະຟໍຣັດ, ວິຕາມິນເອແລະ ມີວິຕາມິນຊີຫລາຍ ມີລິດຊ່ວຍສະໝານບາດແຜ, ເປັນຢາຂັບປັດສະວະ ແລະ ຊ່ວຍບັນເທົາອາການຫລອດລົມອັກເສບ;

ການເລືອກກິນໝາກໄມ້ທຸກຊະນິດ ຕ້ອງເລືອກກິນໝາກໄມ້ສົດ ແລະ ສະອາດ ເພື່ອໃຫ້ຮ່າງກາຍໄດ້ຮັບຄຸນຄ່າສານອາຫານຫລາຍທີ່ສຸດ ແຕ່ສິ່ງທີ່ສຳຄັນກວ່າສິ່ງອື່ນໃດ ຄືການດູແລສຸຂະພາບໃຫ້ແຂງແຮງຢູ່ສະເໝີ.

**kheruxng-dum-pheuxsukhphaph**

## ສາລາກະວີ

# ຫ່ວງສາວນັກຮຽນ

**# ໂດຍ: ອານົງເດດ ສິງດາລັກ**

◆ ກະວີຂຽນສິ່ງໃຫ້
ເຫັນບັນຫາສັງຄົມ
ຊ່າງຜັນແປດຽວນີ້
ນັກຮຽນບາງຜ່ອງນັ້ນ

ລອງອ່ານພິຈາລະນາ
ຫ່ວງໃຍນຳແທ້
ຫລາຍປີເປັນຕ່າງ
ແປປິ້ນປ່ຽນໄປ ແທ້ນາ!

◆ ອາຍຸເລີຍລ່ວງເຂົ້າ
ໂສມໜ້າແວວວາວສີ
ລິງສີຕາແຖມຄິ້ວ
ບໍ່ສົນນຳຄຳແມ່ເວົ້າ

ສິບສີ່ພໍດີ
ແຕ່ງເຕີມເສີມແຕ້ມ
ຍາມໄປຮຽນຮ່ຳ
ຈາຕ້ານຕອບຄືນ

◆ ບໍ່ບຸກບືນຕໍ່ຕັ້ງ
ທຽວຊອກຫາເມົາມົວ
ບາງຜ່ອງລືມລອງເຫລົ້າ
ຕຳລາຮຽນແກວ່ງໄວ້

ຈັບອ່ານຕຳລາ
ບ່ອນຊຸມແຊວຫລິ້ນ
ມຶນເມົາໝົດທ່າ
ໃນຫ້ອງບ່ອນນອນ

◆ ຍາມຄູສອນສັ່ງຊີ້
ແຕ່ບໍ່ປັບປຸງແປງ
ບິດຮຽນຄູສອນໃຫ້
ອອນໄລນ໌ເປັນແມ່ເຄົ້າ

ຈາຕອບຂານຮັບ
ຮ່ຳຮຽນສຶກສາຮູ້
ວິຊາດີມີຈິດຈ່າຍ
ຕົວເຈົ້າຊ່າງເປັນ ແພງເອີຍ!

◆ ລາງຜ່ອງເອົາແຕ່ຫລິ້ນ
ພໍ່ແມ່ຂາຍແຮງງານ
ລູກພັດເອົາໄປໃຊ້
ກາຍໃຈແມ່ອ່ອນລ້າ

ທຽວທ່ອງມອງຊາຍ
ສິ່ງບຸດຮຽນຮູ້
ແນວພານສູນຄ່າ
ບຸດຕານ້ອຍບໍ່ຄຳນຶງ ໜ່າຍເດ!

◆ ປ່ຽນປັບໃຈເຖີດນ້ອງ
ຢ່າໄດ້ຫລົງແສງສີ
ມັນຊິພານຶງນ້ອງ
ຄວາມຫວັງເຄີຍວາດໄວ້

ນວນນາດນາລີ
ຮຸ່ງວິໄລໃສຈ້າ
ລົງຊຸມເຫວໃຫຍ່
ຊີຫາຍຈ້ອຍດັ່ງລົມ ນັ້ນນາ!

◆ ແປປ່ຽນໃຈເຖີດຫລ້າ
ຫັນໃສ່ການສຶກສາ
ຢ່າໄດ້ເປັນສາວນ້ອຍ
ໃຫ້ເປັນຄົນເກັ່ງກ້າ

ອວນອຸ່ນດວງຕາ
ຝຶກຝົນຕົນກ້າວ
ນັກຮຽນມໍສູນຄ່າ
ວິຊາຮູ້ຄູ່ກາຍ ຊອບແລ້ວ!



## ຫັກຫາຍ ລະບາຍ

**# ສາວຈົ້ມ**

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

○ ***ອັບ***ເວລາປ່ຽນແປງ ລະດູການປ່ຽນໄປຈາກ***ປາຍຝົນສູ່ຕົ້ນໜາວ*** ຂໍໃຫ້ຊາວພີ່ນ້ອງ ຫລີງລ່າດູແລ ກຽມແຜ່ນແພສະໄບບົງ ອຸ່ນກາຍາຕຸ້ມ ອຸບທະພູມຫຍັບຍ້າຍ ຕາມເວລາແປປ່ຽນ ຈົ່ງຮັກສາສຸຂະພາບໄວ້ ໃຫ້ແຂງເຂັ້ມແກ່ນພະລັງ ***ທ່ານເອີຍ!***

○ ***ເພື່ອ***ຢຸດຕິການເພີ່ມຂຶ້ນ ຂອງການເສຍຊີວິດຈາກອຸບັດເຫດຕາມຫ້ອງຄະໜົນ ***ສປປລາວ*** ຈະໄດ້ທົດລອງເປີດນຳໃຊ້***ສູນ CCC*** ແລະ ***ເບີສາຍດ່ວນ 1195*** ຢ່າງເປັນທາງການໃນໄວໆນີ້ ເປັນເບີໂທສຸກເສີນທາງການແພດ ໂດຍບຸກຄະລາກອນ ກ່ຽວຂ້ອງກັບການແພດສຸກເສີນ ***ມີກະຊວງສາທາລະນະສຸກ,*** ກະຊວງ***ໂຍທາທິການ*** ແລະ ***ຂົນສົ່ງ, ໂຮງໝໍມິດຕະພາບ, ເຊດຖາ, ມະໂຫສົດ*** ແລະ ***ໂຮງໝໍ 9 ຕົວເມືອງ***ໃນນະຄອນຫລວງ ພ້ອມນັ້ນ ຍັງມີ ***5 ໜ່ວຍງານ*** ຄື ***1623; 1624; 1625; 1628 ແລະ 1630*** ໂດຍໄດ້ຮັບການຝຶກອົບຮົມກະກຽມເຮັດວຽກກ່ຽວກັບພາລະບົດບາດດັ່ງກ່າວຢ່າງຄັກແນ່ ແລະ ຂ່າວຍັງໃຫ້ຮູ້ຕື່ມອີກວ່າ ຜູ້ບັນຊາ (ບໍລິຫານຄຸ້ມຄອງ CCC) ແມ່ນ***ທ່ານໝໍຈາກໂຮງໝໍມິດຕະພາບ*** ພໍໄດ້ຊາບຂ່າວນີ້ ສຸດທີ່ດີໃຈ ຂໍ້ມູນໄວກະທັນຫັນ ອາດຊ່ວຍຄົນເຈັບໄດ້ ໃຫ້***ປອດໄພຫລຸດພົ້ນ*** ບັນຫາ***ການເສຍຊີວິດ*** ຊີໂທຕິດທຸກຄັ້ງ ທັງແກ້ໄຂຮີບຮ້ອນ ໄວພ້າວດ່ວນພະລັນ ***ຄັກແລ້ວ!***

○ ***ຂ່າວ***ທຳລາຍຢາເສບຕິດຫລາຍໂຕນ ປາກົດຂຶ້ນຕາມສື່ຕ່າງໆ ເນື່ອງໃນວັນຕ້ານຢາເສບຕິດ ***(12) ຕຸລາຄົບຮອບ 21 ປີ*** ໃນນີ້ຍັງຮູ້ຕື່ມອີກວ່າ ***1 ປີຜ່ານມາ*** ເຈົ້າໜ້າທີ່ກ່ຽວຂ້ອງສາມາດມ້າງຄະດີຢາເສບຕິດໄດ້ 1.202 ເລື່ອງ. ແກ້ໄຂຈຸດມົ້ວສຸມໄດ້ ***160 ຈຸດ*** ແລະ ມອບເງິນ ກໍຄືຊັບສິນທີ່ໄດ້ຈາກຂະບວນຢາເສບຕິດ ໂດຍຜ່ານການຕັດສິນຂອງສານແລ້ວຈຳນວນ ***4,6 ຕື້ກີບ*** ໃຫ້ເປັນຂອງລັດທີ່ໃຊ້ໄດ້ຢ່າງເດັດຂາດ ຢາເສບຕິດເຮັດໃຫ້ ສັງຄົມຊາດຂາດຄວາມສຸກ ປະຊາຊົນມີທຸກ ທໍ່ວທາບີແຄວນ ຈົ່ງຊ່ວຍກັນສະກັດກັ້ນ ທຳລາຍໃຫ້ສິ້ນຊາກ ຊາດຈຶ່ງເຮືອງຮຸ່ງກ້າວ ສະຫງົບພ້ອມປອດໄພ ***ພີ່ນ້ອງເອີຍ!***

## ຊອບຍິ້ມ

# ແອ່ບຕຸ້ງ

**ເລື່ອງ: ຍ້ອນບໍ່ມີຄືກັນ.**

ທ້າວເອບ ທວາຍທ້າວແອ

**ແອ:** ມຶງຮູ້ບໍ່ວ່າເປັນຫຍັງໄກ່ຜູ້ຈຶ່ງບໍ່ມີນົມ?.
**ເອບ:** ກູຊິໄປຮູ້ຫອະ! ມຶງວ່າເປັນຫຍັງຊິ້ນ.
**ແອ:** ເພາະໄກ່ແມ່ບໍ່ມີນົມ - !!!



## ຄະຕິເຕືອນໃຈ

**# ດອກລະຍອມ**

ຄັບວ່າໃຈປະສົງແລ້ວ ກາງດົງກໍວ່າທົ່ງ
ໃຈປະສົງຊີ້ຄ້ານ ກາງບ້ານກໍວ່າໜາມ

# ກົດໝາຍວ່າດ້ວຍການໂທລະຄົມມະນາຄົມ (ສະບັບປັບປຸງ)

ຕໍ່ຈາກສະບັບກ່ອນ...

**ມາດຕາ 48 (ປັບປຸງ) ສິດ ແລະ ໜ້າທີ່ ຂອງ ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານໂທລະຄົມມະນາຄົມ ພະແນກເຕັກໂນໂລຊີ ແລະ ການສື່ສານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ຕາມກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານໂທລະຄົມມະນາຄົມ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ ແລະ ແຜນພັດ ທະນາ ກ່ຽວກັບວຽກງານໂທລະຄົມມະນາຄົມໃຫ້ສັງຄົມຮັບຮູ້;

3. ອອກ, ຕໍ່, ໂຈະ ຫຼື ຍົກເລີກ ໃບອະນຸຍາດດຳເນີນທຸລະກິດໂທລະຄົມມະນາຄົມ;

4. ກວດກາ, ຢັ້ງຢືນ ຄຸນນະພາບ ອຸປະກອນ ແລະ ການບໍລິການ ໂທລະຄົມມະນາຄົມ;

5. ອອກ ໃບອະນຸຍາດນຳເຂົ້າ ແລະ ສົ່ງອອກອຸປະກອນໂທລະຄົມມະນາຄົມ;

6. ແກ້ໄຂຄຳສະເໜີ ຫຼື ຂໍ້ຂັດແຍ່ງ ກ່ຽວກັບຄຸນນະພາບ, ມາດຕະຖານຂອງການບໍລິການໂທລະຄົມມະນາຄົມ;

7. ເກັບຄ່າທຳນຽມ ແລະ ຄ່າບໍລິການ ໂທລະຄົມມະນາຄົມປະເພດຕ່າງໆ ຕາມລະບຽບການ;

8. ເກັບກຳ ແລະ ຄຸ້ມຄອງ ຂໍ້ມູນສະຖິຕິ ຂອງ ຜູ້ໃຫ້ ແລະ ຜູ້ໃຊ້ ບໍລິການ ໂທລະຄົມມະ ນາຄົມປະເພດຕ່າງໆ ພາຍໃນທ້ອງຖິ່ນຂອງຕົນ;

9. ປະສານສົມທົບກັບພະແນກການ, ຫ້ອງການ ແລະ ອົງການປົກຄອງຂັ້ນເມືອງ ກ່ຽວກັບວຽກງານໂທລະຄົມມະນາຄົມ;

10. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ຕາມການມອບໝາຍຂອງຂັ້ນເທິງ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານໂທລະຄົມມະນາຄົມ ຕໍ່ ກະຊວງເຕັກໂນໂລຊີ ແລະ ການສື່ສານ, ອົງການປົກຄອງແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 49 (ປັບປຸງ) ສິດ ແລະ ໜ້າທີ່ ຂອງ ຫ້ອງການເຕັກໂນໂລຊີ ແລະ ການສື່ສານ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານໂທລະຄົມມະນາຄົມ ຫ້ອງການເຕັກໂນໂລຊີ ແລະ ການສື່ສານ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານໂທລະຄົມມະນາຄົມ;

2. ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ ແລະ ແຜນພັດທະນາ ກ່ຽວກັບວຽກງານໂທລະຄົມມະນາຄົມໃຫ້ສັງຄົມຮັບຮູ້;

3. ອອກ, ຕໍ່, ໂຈະ ຫຼື ຍົກເລີກ ໃບອະນຸຍາດດຳເນີນທຸລະກິດໂທລະຄົມມະນາຄົມ;

4. ນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານໂທລະຄົມມະນາຄົມ;

5. ແກ້ໄຂຄຳສະເໜີຫຼືຂໍ້ຂັດແຍ່ງກ່ຽວກັບຄຸນນະພາບ, ມາດຕະຖານຂອງການບໍລິການໂທລະຄົມມະນາຄົມ;

6. ເກັບຄ່າທຳນຽມ ແລະ ຄ່າບໍລິການ ໂທລະຄົມມະນາຄົມຕ່າງໆ ຕາມລະບຽບການ;

7. ເກັບກຳຂໍ້ມູນສະຖິຕິ ຂອງຜູ້ໃຫ້ ແລະ ຜູ້ໃຊ້ ບໍລິການໂທລະຄົມມະນາຄົມປະເພດຕ່າງໆ ພາຍໃນທ້ອງຖິ່ນຂອງຕົນ;

8. ປະສານສົມທົບກັບຫ້ອງການ ແລະ ອົງການປົກຄອງບ້ານ ກ່ຽວກັບວຽກງານໂທລະຄົມມະນາຄົມ;

9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ ຂອງຕົນຕໍ່ພະແນກເຕັກໂນໂລຊີ ແລະ ການສື່ສານ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດແລະປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ໝວດທີ 2 ການກວດກາວຽກງານໂທລະຄົມມະນາຄົມ

**ມາດຕາ 50 (ປັບປຸງ) ອົງການກວດກາວຽກງານໂທລະຄົມມະນາຄົມ**

ອົງການກວດກາວຽກງານໂທລະຄົມມະນາຄົມ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານໂທລະ ຄົມມະນາຄົມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 46 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ,ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ປະຊາຊົນ.

**ມາດຕາ 51 (ປັບປຸງ) ເນື້ອໃນການກວດກາ**

ການກວດກາວຽກງານໂທລະຄົມມະນາຄົມ ມີເນື້ອໃນ ດັ່ງນີ້:

1. ກວດກາ ການວາງແຜນ, ການດຳເນີນທຸລະກິດ, ການສຳຫຼວດ, ການອອກແບບກໍ່ສ້າງ ແລະ ຕິດຕັ້ງເຄືອຂ່າຍໂທລະຄົມມະນາຄົມ;

2. ກວດກາ ມາດຕະຖານຄວາມປອດໄພ ແລະ ການປົກປັກຮັກສາສິ່ງແວດລ້ອມ ໃນການກໍ່ສ້າງ ແລະ ການຕິດຕັ້ງເຄືອຂ່າຍໂທລະຄົມມະນາຄົມ;

3. ກວດກາ ມາດຕະຖານເຕັກນິກ ແລະ ຄຸນນະພາບ ຂອງເຄືອຂ່າຍໂທລະຄົມມະນາຄົມ;

4. ກວດກາ ການນຳໃຊ້ຊັບພະຍາກອນ ແລະ ການນຳເຂົ້າອຸປະກອນໂທລະຄົມມະນາຄົມ;

5. ປະສານສົມທົບກັບຂະແໜງການການເງິນ ກວດກາລະບົບບັນຊີການເງິນ;

6. ກວດກາ ການປະມູນ, ສັນຍາຮັບເໝົາກໍ່ສ້າງ ແລະ ການຕິດຕັ້ງເຄືອຂ່າຍໂທລະຄົມມະ ນາຄົມ, ການປະຕິບັດສັນຍາຕ່າງໆ;

7. ກວດກາ ການຈັດຕັ້ງປະຕິບັດກົດໝາຍສະບັບນີ້, ກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງກັບວຽກງານໂທລະຄົມມະນາຄົມ.

**ມາດຕາ 52 ຮູບການການກວດກາ**

ການກວດກາວຽກງານໂທລະຄົມມະນາຄົມ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງແຈ້ງໃຫ້ຜູ້ຈະຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຈະຖືກກວດກາ ຮູ້ລ່ວງໜ້າ.

ໃນການດຳເນີນການກວດກາວຽກງານໂທລະຄົມມະນາຄົມ ຕ້ອງປະຕິບັດຕາມກົດໝາຍ ແລະ ລະ ບຽບການຢ່າງເຂັ້ມງວດ.

### ພາກທີ X ວັນໂທລະຄົມມະນາຄົມແຫ່ງຊາດ, ເຄື່ອງໝາຍ, ເຄື່ອງແບບ ແລະ ຕາປະທັບ

**ມາດຕາ 53 ວັນໂທລະຄົມມະນາຄົມແຫ່ງຊາດ**

ລັດ ກຳນົດເອົາວັນທີ 13 ມີນາ ເປັນວັນໂທລະຄົມມະນາຄົມແຫ່ງຊາດ, ແຕ່ລະປີຢູ່ສູນກາງ ແລະ ທ້ອງຖິ່ນ ຕ້ອງຈັດສະເຫຼີມສະຫຼອງວັນດັ່ງກ່າວ ດ້ວຍຮູບການທີ່ເໝາະສົມ.

**ມາດຕາ 54 (ປັບປຸງ) ເຄື່ອງໝາຍ, ເຄື່ອງແບບ ແລະ ຕາປະທັບ**

ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ມີເຄື່ອງໝາຍ, ເຄື່ອງແບບ ແລະ ຕາປະທັບ ທີ່ໄດ້ຮັບອະນຸມັດຈາກລັດຖະບານ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

ອ່ານຕໍ່ສະບັບໜ້າ...




## ... ຫັນປ່ຽນດ້ວຍຕົນເອງ ...

ໂດຍ: ທິດດີ

ຜ່ານມາໄດ້ຂຽນເລື່ອງຍຸດທະສາດຫັນປ່ຽນໂດຍສັນຕິ; ມື້ນີ້ມາເວົ້າເລື່ອງ: 1. ການຫັນປ່ຽນດ້ວຍຕົນເອງ..” ເຊິ່ງຜູ້ຂຽນໄດ້ຄົ້ນຄວ້າຈາກເອກະສານພາຍໃນ ແລະ ຈາກປະເທດເພື່ອນມິດຍຸດທະສາດ... ການທີ່ສະເໜີບົດນີ້ ແມ່ນມີຈຸດປະສົງຢາກໃຫ້ກຳໄດ້ວ່າ ບັນດາປາກົດການຫຍໍ້ທໍ້ຕ່າງໆໃນສັງຄົມ ໂດຍສະເພາະທາງດ້ານແນວຄິດນັ້ນມັນມາຈາກກະໂຕຂອງເຮົາເອງ.

ຫັນປ່ຽນດ້ວຍຕົນເອງ ແມ່ນກະໂຕເຈົ້າກຳເອງ (ອົງການຈັດຕັ້ງ; ບຸກຄົນ) ມີການປະພຶດ; ການກະທຳທີ່ສ້າງຂຶ້ນດ້ວຍຕົນເອງ ໂດຍໃຊ້ກຳລັງແຮງສົມທົບໃຊ້ຄວາມສາມາດສະເພາະຕົວຂອງການຈັດຕັ້ງ ຫລື ບຸກຄົນແລ້ວສ້າງໃຫ້ມີການປ່ຽນແປງເປັນຮູບແບບ; ຮູບລັກສະນະອື່ນທາງດ້ານແນວຄິດ-ການເມືອງ; ສິນລະທຳ; ຄຸນສົມບັດ; ແບບແຜນດຳລົງຊີວິດ ຫລື ທາງດ້ານຈິດສຳນຶກ ແລະ ຄວາມຮັບຜິດຊອບ.

ການຫັນປ່ຽນດ້ວຍຕົນເອງ ແມ່ນດຳເນີນໄປເປັນຂະບວນວິວັດ ໝາຍຄວາມວ່າມັນເກີດຂຶ້ນກັບແຕ່ລະຄົນ, ແຕ່ລະອົງການຈັດຕັ້ງໃນໄລຍະໃດໜຶ່ງອາດຈະຍາວ ຫລື ສັ້ນ ຫລື ດົນປານໃດ ແມ່ນຂຶ້ນກັບຄວາມໜັກແໜ້ນດ້ານການເມືອງ ຂອງສະມາຊິກພັກ ກໍຄືທຸກຊັ້ນຄົນໃນສັງຄົມ ແລະ ລະດັບຄວາມຊື່ສັດທາງດ້ານຄຸນສົມບັດ; ແບບແຜນດຳລົງຊີວິດຂອງແຕ່ລະຄົນ.

ຂະບວນການວິວັດການ “..ຫັນປ່ຽນດ້ວຍຕົນເອງ..” ສາມາດເກີດຂຶ້ນສາມໄລຍະ ໂດຍໃນໄລຍະເບື້ອງຕົ້ນ; ເປົ້າໝາຍຈະສະແດງຄວາມຄອນແຄນ; ຫວັ່ນໄຫວທາງດ້ານການເມືອງແນວຄິດ; ເກີດຄວາມສົງໄສກ່ຽວກັບການນຳພາຂອງພັກ ແລະ ລັກສະນະວິທະຍາສາດຂອງລັດທິມາກ-ເລນິນ...ການສະແດງອອກແບບນີ້ຖ້າບໍ່ມີການຕິດຕາມ; ສຳຫລວດກວດກາ; ຕຳນິຕິຊົມຈະບໍ່ສາມາດຜ່ານໄລຍະນີ້ໄປໄດ້.. ໄລຍະທີສອງ ເປົ້າໝາຍຈະເລີ່ມເປັນເຈົ້າການໃນການຮັບຂໍ້ມູນທີ່ຜິດພາດ; ບັນດາຖ້ອຍທຳນອງຕໍ່ຕ້ານ ຫລື ທິດສະດີປໍລະປັກກ້າວໄປເຖິງການເກັບກຳຂໍ້ມູນພາຍໃນ ສົ່ງອອກໄປຕ່າງປະເທດ ໂດຍຜ່ານສື່ອອນລາຍ ຫລື ຜ່ານບັນດາການເຄື່ອນໄຫວສາກົນເປັນຂົວຕໍ່ໃຫ້ອິດທິກຳລັງປໍລະປັກຈາກພາຍນອກບຸກໂຈມຕີເຂົ້າພາຍໃນພວກເຮົາ, ໄລຍະທີສາມແມ່ນໄລຍະສູງຂອງການຫັນປ່ຽນດ້ວຍຕົນເອງ; ເປົ້າໝາຍເຕັມໄປດ້ວຍແນວຄິດປໍລະປັກ ແລະ ຕໍ່ຕ້ານ; ມັນຈະໄປຊອກຫາກຳລັງເພື່ອເຕົ້າໂຮມສ້າງຕັ້ງເປັນຫລັກແຫລ່ງແກ່ນສານເປັນການຈັດຕັ້ງເບື້ອງຕົ້ນ. ບາງຄົນກໍໄປຊອກທາງເຂົ້າໄປຫາອົງການພິເສດຢູ່ຕ່າງປະເທດເພື່ອສົມຮູ້ຮ່ວມຄິດ.

ບັນດາປາກົດການທີ່ສະແດງອອກໃຫ້ເຫັນເຖິງການຫັນປ່ຽນດ້ວຍຕົນເອງຂອງພະນັກງານ; ສະມາຊິກພັກຈຳນວນໜຶ່ງພໍສັງລວມໄດ້ດັ່ງນີ້:

- ດຳລົງຊີວິດເຫັນແກ່ຕົວ; ເຫັນແກ່ຜົນປະໂຫຍດສ່ວນຕົວ; ສວຍໂອກາດຈາກຊ່ອງວ່າງ ເພື່ອສ້າງຮັ່ງຄູນມີ; ສໍ້ລາດບັງຫລວງ ຟຸມເຟືອຍໃນການດຳລົງຊີວິດ.
- ມັກສ້າງຊື່ສຽງ; ພັກພວກ, ພາກສ່ວນຂາດຄວາມສາມັກຄີ.
- ເປັນອາດຍາສິດ, ຫ່າງເຫີນປະຊາຊົນ; ຂາດຄວາມຮູ້ສຶກຕໍ່ຄວາມຫຍຸ້ງຍາກ; ຄວາມເດືອດຮ້ອນຂອງປະຊາຊົນ.
- ມີແບບແຜນດຳລົງຊີວິດທີ່ຟຸມເຟືອຍ; ສະໜຸກສຸກສະບາຍ; ເສື່ອມຊາມ.
- ຄຳເວົ້າບໍ່ໄປຄຽງຄູ່ກັບການກະທຳ; ເວົ້າຢ່າງໜຶ່ງເຮັດອີກຢ່າງໜຶ່ງ; ບໍ່ເຂັ້ມງວດຕໍ່ຄຸນສົມບັດສິນທຳປະຕິວັດ, ຫລັກສິນທຳ ແລະ ຈັນຍາບັນອາຊີບ; ບໍ່ເປັນແບບຢ່າງໃນການດຳລົງຊີວິດຂອງຕົນເອງ ແລະ ຄອບຄົວໃນສັງຄົມ.

ທັງໝົດນັ້ນຄື ບາງຂໍ້ມູນ ທີ່ສຳຄັນຂອງການຫັນປ່ຽນດ້ວຍຕົນເອງທີ່ເປັນຂົວຕໍ່ສຳຄັນຂອງຍຸດທະສາດການຫັນປ່ຽນໂດຍສັນຕິບຸກໂຈມຕີເຂົ້າພວກເຮົາ.




**ກົດໝາຍວ່າດ້ວຍ ການຕ້ານການສໍ້ລາດບັງຫລວງ (ສະບັບປັບປຸງ)**

ຄັດໂດຍ: ກົງທະນູຄຳ ພົມພັດເສລີ

ການອະທິບາຍຄຳສັບ ໃນມາດຕາ 3 (ປັບປຸງ) ຂອງກົດໝາຍວ່າດ້ວຍ ການຕ້ານການສໍ້ລາດບັງຫລວງ (ສະບັບປັບປຸງ) ມີທັງໝົດ 4 ຂໍ້. ໜັງສືພິມຜູ້ແທນປະຊາຊົນ ສະບັບນີ້ ຈະນຳສະເໜີຕໍ່ບັນດາທ່ານຜູ້ອ່ານ 2 ຂໍ້ ແລະ ອີກ 2 ຂໍ້ ຈະພິມໃນສະບັບຕໍ່ໆໄປ

1. ພະນັກງານຂອງລັດ ໝາຍເຖິງ ພະນັກງານນຳພາຂັ້ນຕ່າງໆ, ພະນັກງານຄຸ້ມຄອງ, ພະນັກງານວິຊາການ, ລັດຖະກອນ, ທະຫານ, ຕຳຫລວດ, ພະນັກງານລັດວິສາຫະກິດ, ພະນັກງານລັດວິສາຫະກິດປະສົມ, ລັດຮຸ້ນສ່ວນກອງບໍລິຫານວິຊາການ,ທຸກການຈັດຕັ້ງການຜະລິດທຸລະກິດທີ່ລັດຈັດຕັ້ງຂຶ້ນລວມທັງນາຍບ້ານ ແລະ ຜູ້ໄດ້ຮັບມອບສິດ, ໜ້າທີ່ ໃດໜຶ່ງ ຈາກທາງການ;

2. ພະນັກງານວິສາຫະກິດ ໝາຍເຖິງ ພະນັກງານວິສາຫະກິດເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມາເຄື່ອນໄຫວດເນີນທຸລະກິດຢູ່ ສປປລາວ;

# ອັງກິດ ປະກາດຍົກເລີກແຜນການ ຫລຸດພາສີທີ່ປະກາດກ່ອນໜ້ານີ້

**ແປ ແລະ ຮຽບຮຽງ: ທະນາກອນ**



*ລັດຖະມົນຕີການເງິນຄົນໃໝ່ຂອງອັງກິດ ໄດ້ຖະແຫລງວ່າ: ລັດຖະບານໄດ້ຕັດສິນໃຈຍົກເລີກມາດຕະການປັບຫລຸດພາສີເກືອບທັງໝົດທີ່ໄດ້ປະກາດກ່ອນໜ້ານີ້.*

ອີງຕາມການລາຍງານຂ່າວໃນວັນທີ 17 ຕຸລາຜ່ານມາ ໃຫ້ຮູ້ວ່າ: ທ່ານ ເຈີເຣມີ ຮັນ ເຊິ່ງເປັນລັດຖະມົນຕີການເງິນຄົນໃໝ່ຂອງອັງກິດ ໄດ້ກ່າວໃນຖະແຫລງການວ່າ: “ລັດຖະບານມີໜ້າທີ່ຕົ້ນຕໍໃນການຮັກສາສະຖຽນລະພາບດ້ານເສດຖະກິດ ໂດຍບໍ່ມີລັດຖະບານໃດສາມາດຄວບຄຸມຕະຫລາດໄດ້ ແຕ່ທຸກໆລັດຖະບານສາມາດສ້າງຄວາມໝັ້ນໃຈກ່ຽວກັບຄວາມຍືນຍົງຂອງສະຖານະພາບທາງການເງິນ ຍ້ອນສາເຫດດັ່ງກ່າວ ເຖິງແມ່ນວ່າ ທ່ານນາຍົກລັດຖະມົນຕີ ແລະ ຂ້າພະເຈົ້າມີຈຸດປະສົງທີ່ຈະປັບຫລຸດພາສີໃນພາກທຸລະກິດ ແຕ່ໃນວັນສຸກທີ 15 ຕຸລາຜ່ານມາ ທ່ານນາຍົກລັດຖະມົນຕີກໍໄດ້ຮັບຟັງຄວາມຫ່ວງໃຍກ່ຽວກັບການກະກຽມງົບປະມານເສີມ”.

ທ່ານ ເຈີເຣມີ ຮັນ ໄດ້ກ່າວວ່າ: ລັດຖະບານຈະອອກຖະແຫລງການ ແລະ ຕອບຄຳຖາມກ່ຽວກັບການຍົກເລີກການຫລຸດພາສີຢູ່ໃນກອງປະຊຸມລັດຖະສະພາເພີ່ມຕື່ມ ແຕ່ເນື່ອງຈາກວ່າບັນຫາດັ່ງກ່າວມີຄວາມອ່ອນໄຫວ ແລະ ອາດຈະສົ່ງຜົນກະທົບຕໍ່ຕະຫລາດ ທ່ານຈຶ່ງສາມາດເປີດເຜີຍໄດ້ພຽງສັ້ນໆເພື່ອຮັກສາຄວາມໝັ້ນໃຈ ແລະ ຄວາມໝັ້ນຄົງໃນຕະຫລາດ.

ຄຳຖະແຫລງການດັ່ງກ່າວມີຂຶ້ນ ຫລັງຈາກວັນສຸກທີ່ຜ່ານມາ, ທ່ານ ນາງ ລິດ ທຣັສ ນາຍົກລັດຖະມົນຕີອັງກິດ ສັ່ງປົດທ່ານ ຄວາຊີ ຄວາເຕັງ ຈາກຕຳແໜ່ງລັດຖະມົນຕີການເງິນອັງກິດ ແລະ ແຕ່ງຕັ້ງທ່ານ ເຈີເຣມີ ຮັນ ອະດີດລັດຖະມົນຕີຕ່າງປະເທດ ເຂົ້າຮັບຕຳແໜ່ງແທນ.

ທ່ານ ນາງ ລິດ ທຣັສ ຍັງໄດ້ປະກາດວ່າ ຕົນໄດ້ຍົກເລີກແຜນການປັດຫລຸດພາສີທີ່ໄດ້ສ້າງຄວາມປັ່ນປ່ວນໃນຕະຫລາດການເງິນໃນເມື່ອກ່ອນ ພ້ອມລະບຸວ່າ ພາສີເງິນນິຕິບຸກຄົນ ຈະເພີ່ມຂຶ້ນເປັນ 25%.

**ແຫລ່ງຂ່າວ: www.ryt9.com**

# ຫວຽດນາມ ໄດ້ຮັບເລືອກຕັ້ງເປັນສະມາຊິກ ສະພາສິດທິມະນຸດ

**ແປ ແລະ ຮຽບຮຽງ: ພຶດສະໄໝ**

ຕາມການລາຍງານໃນວັນທີ 17 ຕຸລາ 2022 ໃຫ້ຮູ້ວ່າ: ທ່ານ ແສງເພັດ ຮຸ່ງບຸນຍວງ ເອກອັກຄະລັດຖະທູດລາວ ປະຈຳ ສສ.ຫວຽດນາມ ໄດ້ເຊີດຊູຄວາມໝາຍຂອງເຫດການດັ່ງກ່າວຕໍ່ກັບພາກພື້ນ ພ້ອມທັງສະແດງຄວາມຫວັງວ່າ ຫວຽດນາມ ກັບໜ້າທີ່ອັນສຳຄັນນີ້ສາມາດຊ່ວຍໃຫ້ປະພາກພື້ນອາຊີຕາເວັນອອກສ່ຽງໃຕ້ ໄດ້ໃຫ້ຄວາມສຳຄັນສິດທິມະນຸດ, ສິດທິຂອງພົນລະເມືອງ ນັບມື້ນັບດີຂຶ້ນກວ່າເກົ່າ.

ທ່ານ ແສງເພັດ ຮຸ່ງບຸນຍວງ ໄດ້ສະແດງຄວາມຊົມເຊີຍຕໍ່ ສສ.ຫວຽດນາມ ທີ່ໄດ້ຜ່ານການລົງຄະແນນສຽງເພື່ອໄດ້ເປັນສະມາຊິກສະພາສິດທິມະນຸດຂອງ ອົງການ ສປຊ ເຊິ່ງຈະໄດ້ເລີ່ມຈັດຕັ້ງຂຶ້ນໃນປີ 2023-2025 ສສ.ຫວຽດນາມ ແມ່ນປະເທດທີ່ສະໝັກຮັບເລືອກຕັ້ງໜຶ່ງດຽວຂອງອາຊຽນ ສະນັ້ນເຫດການນີ້ບໍ່ພຽງແຕ່ແມ່ນຂ່າວດີສຳລັບຫວຽດນາມເທົ່ານັ້ນ ຍັງເປັນຂ່າວດີ ແລະ ຄວາມເອກອ້າງທະນົງໃຈຂອງພາກພື້ນອາຊີຕາເວັນອອກສ່ຽງໃຕ້ອີກດ້ວຍ.

ສສ.ຫວຽດນາມ ໄດ້ຮັບເລືອກຕັ້ງເປັນສະມາຊິກສະພາສິດທິມະນຸດ ຢັ້ງຢືນການຮັບຮູ້ຂອງປະຊາຄົມສາກົນຕໍ່ກັບນະໂຍບາຍ ແລະ ຜົນງານຂອງ ສສ ຫວຽດນາມ ໂດຍການຮັບປະກັນສິດທິມະນຸດຢູ່ພາຍໃນປະເທດ ກໍຄືການປະກອບສ່ວນຢ່າງຕັ້ງໜ້າຂອງ ສສ.ຫວຽດນາມ ຕໍ່ກັບພາກພື້ນ ແລະ ສາກົນຄື: ຄະນະກຳມະການລະຫວ່າງລັດຖະບານອາຊຽນວ່າດ້ວຍສິດທິມະນຸດ (AICHR) ຫລື ໃນອາຍຸການເປັນສະມາຊິກບໍ່ຖາວອນສະພາຄວາມໝັ້ນຄົງອົງການ ສປຊ ໃນຊຸມປີ 2020-2021 ທີ່ຜ່ານມາ.

ສສ.ຫວຽດນາມ ທີ່ໄດ້ຮັບເລືອກຕັ້ງດຳລົງຕຳແໜ່ງສຳຄັນຂອງອົງການ ສປຊ ສະແດງໃຫ້ເຫັນເຖິງບົດບາດ ແລະ ອິດທິພົນຊື່ສຽງຂອງບັນດາປະເທດສະມະຊິກອາຊຽນ ນັບມື້ນັບສູງ ເຫດການດັ່ງກ່າວນີ້ ຢັ້ງຢືນວ່າທັດສະນະຂອງບັນດາປະເທດສາມະຊິກອາຊຽນ ໂດຍໄດ້ການຍອມຮັບຈາກສາກົນ.

**ແຫລ່ງຂ່າວ: ກປ.ອອນໄລ**













ທະນາຄານພັດທະນາລາວ
LDB Bank

ທະນາຄານພົງສະຫວັນ
Phongsavanh BANK



| ຜູ້ຊີ້ນຳ | ຄະນະຊ່ຽວຊານທີ່ປຶກສາ | ຫົວໜ້າບັນນາທິການ | ກອງບັນນາທິການ | ອອກແບບຈັດໜ້າ |
| --- | --- | --- | --- | --- |
| ທ່ານ ສິງຄຳ ວົງພະຈັນ | ທ່ານ ສີສຸພັນ ແສງສະຫວັນ<br>ທ່ານ ວິເສດ ສະແຫວງສຶກສາ<br>ທ່ານ ຄຳວິສັນ ແກ້ວສຸວັນ | ທ່ານ ປອ. ພຶດສະໄໝ ບຸນວິໄລ<br>ທ່ານ ຂັນທະວີ ວົງພະຈັນ | ທ່ານ ນາງ ກົງໃຈ ແສງອຳພັນ<br>ທ່ານ ນາງ ສຸພາວັນ ທອມສະນິດ<br>ທ່ານ ນາງ ປາກາລັກ ພົມມີໄຊ | ທ່ານ ນາງ ກຸກກິກ ບຸດດາໄຊ<br>ທ່ານ ສົມນຶກ ແກ້ວໄຊຍະຈັກ |